**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ລັດຖະບານ ເລກທີ...516.........../ລບ
ນະຄອນຫຼວງວຽງຈັນ, ວັນທີ...23..09...2020.

# ດຳລັດ
# ວ່າດ້ວຍການຂ້າສັດ ແລະ ການກວດກາອະນາໄມຊີ້ນ

- ອີງຕາມ ກົດໝາຍ ວ່າດ້ວຍລັດຖະບານ ສະບັບເລກທີ 04/ສພຊ, ລົງວັນທີ 08 ພະຈິກ 2016;
- ອີງຕາມ ກົດໝາຍ ວ່າດ້ວຍການລ້ຽງສັດ ແລະ ການສັດຕະວະແພດ ສະບັບເລກທີ 08/ສພຊ, ລົງວັນທີ 11 ພະຈິກ 2016;
- ອີງຕາມ ໜັງສືສະເໜີ ຂອງກະຊວງກະສິກຳ ແລະ ປ່າໄມ້ ສະບັບເລກທີ 0543/ກປ, ລົງວັນທີ 13 ສິງຫາ 2020.

## ລັດຖະບານ ອອກດຳລັດ:

## ໝວດທີ 1
## ບົດບັນຍັດທົ່ວໄປ

### ມາດຕາ 1 ຈຸດປະສົງ

ດຳລັດສະບັບນີ້ ກຳນົດຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບ ການຄຸ້ມຄອງ ແລະ ຕິດຕາມກວດກາ ວຽກງານຂ້າສັດ ແລະ ກວດກາອະນາໄມຊີ້ນ ເພື່ອຮັບປະກັນໃຫ້ໄດ້ຜະລິດຕະພັນສັດ ທີ່ມີຄຸນນະພາບ, ປອດໄພ ແລະ ເໝາະສົມສຳລັບການບໍລິໂພກ ແນໃສ່ປົກປ້ອງ, ສົ່ງເສີມ ສຸຂະພາບຂອງຄົນ ແລະ ບໍ່ສ້າງຜົນກະທົບຕໍ່ສິ່ງແວດລ້ອມ ປະກອບສ່ວນ ເຂົ້າໃນການຄ້ຳປະກັນຄວາມໝັ້ນຄົງທາງດ້ານສະບຽງອາຫານ ແລະ ການຜະລິດເປັນສິນຄ້າ ຕາມທິດກະສິກຳສີຂຽວ, ສະອາດ ແລະ ຍືນຍົງ.

### ມາດຕາ 2 ການຂ້າສັດ ແລະ ການກວດກາອະນາໄມຊີ້ນ

ການຂ້າສັດ ແມ່ນ ຂະບວນການເຮັດໃຫ້ສັດຕາຍແບບບໍ່ທໍລະມານ ຊຶ່ງເລີ່ມແຕ່ຂັ້ນຕອນການກະກຽມຢູ່ໂຮງຂ້າສັດ ແລະ ບ່ອນຂ້າສັດຍ່ອຍ, ການຂົນສົ່ງສັດເຂົ້າໂຮງຂ້າສັດ, ວິທີການຂ້າ ແລະ ຄົວສັດ ເພື່ອໃຫ້ໄດ້ຜະລິດຕະພັນສັດທີ່ ສະອາດ, ປອດໄພ ແລະ ເໝາະສົມສຳລັບການບໍລິໂພກ.

ການກວດກາອະນາໄມຊີ້ນ ແມ່ນ ຂະບວນການກວດກາດ້ານວິຊາການສັດຕະວະແພດ ຊຶ່ງເລີ່ມແຕ່ການກວດກາຄວາມສະອາດຂອງໂຮງຂ້າສັດ, ການກວດກາສຸຂະພາບສັດກ່ອນຂ້າ, ກວດກາຄວາມສະອາດ ແລະ ຄວາມປອດໄພ ຂອງຜະລິດຕະພັນສັດຫຼັງການຂ້າສັດ.

**ມາດຕາ 3 ການອະທິບາຍຄໍາສັບ**

ຄໍາສັບທີ່ນໍາໃຊ້ໃນດໍາລັດສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ສັດ** ໝາຍເຖິງ ງົວ, ຄວາຍ, ໝູ, ແກະ, ແບ້, ສັດປີກ ແລະ ສັດອື່ນ ຕາມທີ່ອົງການຄຸ້ມຄອງ ແລະ ກວດກາ ວຽກງານຂ້າສັດ ແລະ ກວດກາອະນາໄມຊີ້ນ ກໍານົດ;
2. **ໂຮງຂ້າສັດ** ໝາຍເຖິງ ສະຖານທີ່ ແລະ ອາຄານ ທີ່ປະກອບດ້ວຍ ເຄື່ອງມື ແລະ ອຸປະກອນ ເພື່ອອໍານວຍຄວາມສະດວກ ສໍາລັບການ ຂ້າ, ຄົວສັດ ແລະ ການປຸງແຕ່ງຜະລິດຕະພັນສັດຂັ້ນຕົ້ນ ທີ່ປອດໄພສໍາລັບການບໍລິໂພກ ຊຶ່ງໄດ້ຮັບອະນຸຍາດໂດຍຖືກຕ້ອງຕາມກົດໝາຍ;
3. **ບ່ອນຂ້າສັດຍ່ອຍ** ໝາຍເຖິງ ສະຖານທີ່ ແລະ ອາຄານ ທີ່ປະກອບດ້ວຍ ເຄື່ອງມື ແລະ ອຸປະກອນ ເພື່ອອໍານວຍຄວາມສະດວກ ສໍາລັບການ ຂ້າ, ຄົວສັດ ທີ່ໄດ້ຮັບອະນຸຍາດໃຫ້ດໍາເນີນການຂ້າສັດ ທີ່ມີຈໍານວນຈໍາກັດ;
4. **ສະຖານທີ່ພັກສັດກ່ອນຂ້າ** ໝາຍເຖິງ ບ່ອນກັກຂັງສັດກ່ອນນໍາເຂົ້າຂ້າ ທີ່ກໍ່ສ້າງຂຶ້ນຢູ່ໃກ້ກັບໂຮງຂ້າສັດ ແລະ ບ່ອນຂ້າສັດຍ່ອຍ;
5. **ຊີ້ນ** ໝາຍເຖິງ ຊີ້ນສົດ ແລະ ພາກສ່ວນຕ່າງໆຂອງສັດ ທີ່ກິນໄດ້ ຊຶ່ງໄດ້ຜ່ານການກວດກາຮັບຮອງວ່າປອດໄພ ແລະ ເໝາະສົມ ສໍາລັບການບໍລິໂພກ;
6. **ຊີ້ນສົດ** ໝາຍເຖິງ ຊີ້ນສັດ, ເຄື່ອງໃນ ທີ່ຍັງບໍ່ທັນໄດ້ຜ່ານຂະບວນການປຸງແຕ່ງ ຫຼື ຖະໜອມອາຫານ ລວມທັງ ຊີ້ນແຊ່ເຢັນ ແລະ ຊີ້ນທີ່ບັນຈຸໃນພາຊະນະທີ່ສາມາດຄົງສະພາບຂອງຊີ້ນ ຕາມທໍາມະຊາດຂອງມັນ;
7. **ຊາກສັດ** ໝາຍເຖິງ ພາກສ່ວນທັງໝົດຮ່າງກາຍຂອງສັດ ທີ່ໄດ້ເອົາເລືອດ, ຂົນ ຫຼື ໜັງ, ຫົວ, ຕີນ, ຫາງ ແລະ ເຄື່ອງໃນອອກແລ້ວ ຊຶ່ງເໝາະສົມສໍາລັບນໍາໄປບໍລິໂພກ;
8. **ເຄື່ອງໃນ** ໝາຍເຖິງ ອະໄວຍະວະພາຍໃນ ຂອງສັດ ເປັນຕົ້ນ ຕັບ, ໄຕ, ໄຂ່ຫຼັງ, ຫົວໃຈ, ປອດ, ມ້າມ, ຫຼອດລົມ, ທໍ່ອາຫານ, ກະເພາະ, ລໍາໄສ້, ອະໄວຍະວະສືບພັນ;
9. **ຜະລິດຕະພັນສັດ** ໝາຍເຖິງ ຜົນຜະລິດ ທີ່ໄດ້ຈາກອະໄວຍະວະຂອງສັດ ເປັນຕົ້ນ ຊາກສັດ, ຊີ້ນ, ນົມ, ໄຂ່, ໜັງ, ເລືອດ, ເຄື່ອງໃນ, ໄຂມັນ, ນໍ້າເຊື້ອ, ຕົວອ່ອນ, ຈຸລັງໄຂ່;
10. **ຜະລິດຕະພັນສໍາຮອງຈາກສັດ** ໝາຍເຖິງ ຊີ້ນສ່ວນໃດໜຶ່ງຂອງສັດ ຊຶ່ງບໍ່ສາມາດນໍາມາປຸງແຕ່ງເປັນອາຫານ ເປັນຕົ້ນ ເຂົາ, ກະດູກ, ຂົນ, ເລັບ ລວມທັງ ຜະລິດຕະພັນສັດຂັ້ນຕົ້ນ ທີ່ບໍ່ເໝາະສົມສໍາລັບການບໍລິໂພກ ຊຶ່ງອະນຸຍາດໃຫ້ນໍາໃຊ້ເຂົ້າໃນຈຸດປະສົງອື່ນ;
11. **ເຂດເປື້ອນ** ໝາຍເຖິງ ເຂດ ຫຼື ສະຖານທີ່ ທີ່ຢູ່ໃນໂຮງຂ້າສັດ ຫຼື ບ່ອນຂ້າສັດຍ່ອຍ ຊຶ່ງປະກອບດ້ວຍຈຸດ ເຮັດໃຫ້ສັດສະຫຼົບ, ເອົາເລືອດອອກ, ລອກໜັງ, ລວກ ແລະ ຈຸດເອົາຂົນສັດອອກ;
12. **ເຂດສະອາດ** ໝາຍເຖິງ ເຂດ ຫຼື ສະຖານທີ່ ທີ່ຢູ່ໃນໂຮງຂ້າສັດ ຫຼື ບ່ອນຂ້າສັດຍ່ອຍ ຊຶ່ງປະກອບດ້ວຍຈຸດ ເອົາເຄື່ອງໃນອອກ, ລ້າງ ແລະ ຕັດແຕ່ງຊາກ, ແຍກປະເພດຊີ້ນ, ຫຸ້ມຫໍ່, ຕິດສະຫຼາກ ເກັບຮັກສາຜະລິດຕະພັນສັດ ແລະ ຈຸດສົ່ງຂຶ້ນລົດຂົນສົ່ງ;
13. **ລະບົບການຜະລິດທີ່ດີ** ໝາຍເຖິງ ລະບົບທີ່ສ້າງຂຶ້ນ ເພື່ອໃຫ້ເປັນມາດຕະຖານປະຕິບັດ ແນໃສ່ຮັບປະກັນຄຸນນະພາບຂອງຜະລິດຕະພັນ ໃຫ້ໄດ້ຕາມມາດຕະຖານຄວາມປອດໄພທາງດ້ານອາຫານ ທີ່ອົງການຄຸ້ມຄອງ ແລະ ກວດກາ ວຽກງານຂ້າສັດ ແລະ ກວດກາອະນາໄມຊີ້ນ ແລະ ອົງການທີ່ກ່ຽວຂ້ອງກໍານົດ;
14. **ສັດຢູ່ໃນໄລຍະທີ່ນໍາໃຊ້ເປັນແນວພັນ** ໝາຍເຖິງ ສັດແນວພັນດີ ທີ່ກະຊວງກະສິກໍາ ແລະ ປ່າໄມ້ ໄດ້ຂຶ້ນທະບຽນໄວ້ໃຫ້ເປັນ ພໍ່ພັນ, ແມ່ພັນ ທີ່ຍັງສາມາດໃຫ້ຜົນຜະລິດ ຫຼື ເປັນສັດສະຫງວນພັນ;
15. **ການກວດກາສຸຂະພາບສັດກ່ອນຂ້າ** ໝາຍເຖິງ ການກວດກາຂອງພະນັກງານກວດກາອະນາໄມຊີ້ນ ຢູ່ບ່ອນພັກສັດກ່ອນຂ້າ ດ້ວຍການກວດກາເອກະສານ, ການສັງເກດເບິ່ງລັກສະນະພາຍນອກ, ການເຄື່ອນໄຫວ, ວັດແທກອຸນຫະພູມ ແລະ ຈັງຫວະການຫາຍໃຈ, ສໍາຜັດ, ຟັງ

ລວມທັງ ເກັບຕົວຢ່າງໄປວິໄຈ ຮັບປະກັນໃຫ້ໄດ້ສັດທີ່ມີສຸຂະພາບສົມບູນແຂງແຮງ ເໝາະສຳລັບນຳເຂົ້າຂ້າ ເພື່ອການບໍລິໂພກ;

16. **ການກວດກາອະນາໄມຊີ້ນຫຼັງຂ້າ** ໝາຍເຖິງ ຂະບວນການກວດກາສະພາບ ແລະ ຮ່ອງຮອຍຕ່າງໆ ຂອງຊາກ ແລະ ເຄື່ອງໃນຫຼັງການຂ້າ ຊຶ່ງລວມເອົາ ຜົນຂອງການກວດກາກ່ອນຂ້າ, ການສັງເກດ, ການສຳພັດ, ການດົມກິ່ນ, ການປາດຊາກ ແລະ ເຄື່ອງໃນຂອງສັດ ລວມທັງ ການເກັບຕົວຢ່າງໄປວິໄຈ ເພື່ອຢັ້ງຢືນເຖິງຄວາມປອດໄພ ແລະ ຄວາມເໝາະສົມ ສຳລັບການບໍລິໂພກ;
17. **ສານເລັ່ງຊີ້ນແດງ** ໝາຍເຖິງ ສານໃນກຸ່ມ ເບຕາອາໂກນິສ ເປັນຢາປິ່ນປົວໃນຄົນ ຊຶ່ງຜູ້ລ້ຽງສັດນຳເອົາມາປະສົມລົງໃນອາຫານສັດ ເພື່ອເລັ່ງການຈະເລີນເຕີບໂຕຂອງສັດ, ເຮັດໃຫ້ການສະສົມໄຂມັນຢູ່ໃນຊີ້ນສັດຫຼຸດລົງ ແລະ ໃຫ້ໄດ້ຊີ້ນແດງເພີ່ມຂຶ້ນ.

### ມາດຕາ 4 ນະໂຍບາຍຂອງລັດກ່ຽວກັບວຽກງານຂ້າສັດ ແລະ ກວດກາອະນາໄມຊີ້ນ

ລັດ ເອົາໃຈໃສ່ຕໍ່ວຽກງານຂ້າສັດ ແລະ ກວດກາອະນາໄມຊີ້ນ ດ້ວຍການບຳລຸງບຸກຄະລາກອນ, ຄົ້ນຄວ້າ, ທົດລອງ, ພັດທະນາ ແລະ ຖ່າຍທອດເຕັກນິກວິຊາການ ກ່ຽວກັບ ການຂ້າສັດ ແລະ ກວດກາອະນາໄມຊີ້ນ ລວມທັງ ການກໍ່ສ້າງພື້ນຖານໂຄງລ່າງ, ວັດຖຸເຕັກນິກ ເພື່ອຮັບປະກັນວຽກງານດັ່ງກ່າວ ໃຫ້ມີປະສິດທິຜົນ.

ລັດ ຊຸກຍູ້, ສົ່ງເສີມ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ລົງທຶນເຂົ້າໃນການດຳເນີນທຸລະກິດ ກ່ຽວກັບ ການຂ້າສັດ ທີ່ມີຄຸນນະພາບ, ປອດໄພ, ໄດ້ມາດຕະຖານ, ມີປະສິດທິຜົນ, ບໍ່ສ້າງຜົນກະທົບຕໍ່ສັງຄົມ ແລະ ສິ່ງແວດລ້ອມ ດ້ວຍການສະໜອງຂໍ້ມູນ ຂ່າວສານ, ເຕັກນິກວິຊາການ ແລະ ນະໂຍບາຍດ້ານພາສີ, ອາກອນ ຕາມກົດໝາຍ ແລະ ລະບຽບການ.

### ມາດຕາ 5 ຫຼັກການ ກ່ຽວກັບ ວຽກງານຂ້າສັດ ແລະ ກວດກາອະນາໄມຊີ້ນ

ວຽກງານຂ້າສັດ ແລະ ກວດກາອະນາໄມຊີ້ນ ປະຕິບັດຕາມຫຼັກການ ດັ່ງນີ້:

1. ສອດຄ່ອງ ກັບ ນະໂຍບາຍ, ກົດໝາຍ, ລະບຽບການ ແລະ ມາດຕະຖານເຕັກນິກທີ່ກ່ຽວຂ້ອງ;
2. ຄຸ້ມຄອງຢ່າງລວມສູນ ແລະ ເປັນເອກະພາບ ໃນຂອບເຂດທົ່ວປະເທດ;
3. ຮັບປະກັນ ຄຸນນະພາບ ແລະ ຄວາມປອດໄພ ຕໍ່ສຸຂະພາບຂອງຜູ້ບໍລິໂພກ ແລະ ບໍ່ສ້າງຜົນກະທົບຕໍ່ສິ່ງແວດລ້ອມ;
4. ຮັບປະກັນ ຄວາມໂປ່ງໃສ, ຍຸຕິທຳ ແລະ ສາມາດກວດສອບໄດ້;
5. ສອດຄ່ອງກັບສົນທິສັນຍາ ແລະ ສັນຍາສາກົນ ທີ່ ສປປ ລາວ ເປັນພາຄີ.

### ມາດຕາ 6 ຂອບເຂດການນຳໃຊ້

ດຳລັດສະບັບນີ້ ນຳໃຊ້ສຳລັບບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ທີ່ເຄື່ອນໄຫວ ກ່ຽວກັບ ວຽກງານຂ້າສັດ ແລະ ກວດກາອະນາໄມຊີ້ນ ຢູ່ ສປປ ລາວ.

## ໝວດທີ 2
## ການຂ້າສັດ

### ມາດຕາ 7 ສະຖານທີ່ຂ້າສັດ

ສະຖານທີ່ຂ້າສັດ ປະກອບດ້ວຍ:

1. ໂຮງຂ້າສັດ;
2. ບ່ອນຂ້າສັດຍ່ອຍ;

3. ສະຖານທີ່ຂ້າສັດອື່ນ ທີ່ຢູ່ໃນເຂດບໍ່ມີໂຮງຂ້າສັດ ແລະ ບ່ອນຂ້າສັດຍ່ອຍ ທີ່ໄດ້ຮັບອະນຸຍາດເປັນທາງການ ຈາກອົງການຄຸ້ມຄອງ ແລະ ກວດກາ ວຽກງານຂ້າສັດ ແລະ ກວດກາອະນາໄມຊີ້ນ. ກະຊວງກະສິກຳ ແລະ ປ່າໄມ້ ເປັນຜູ້ກຳນົດລະບຽບການ ກ່ຽວກັບ ການຂ້າສັດຢູ່ສະຖານທີ່ດັ່ງກ່າວ.

**ມາດຕາ 8 ຂະໜາດຂອງໂຮງຂ້າສັດ ແລະ ບ່ອນຂ້າສັດຍ່ອຍ**

ຂະໜາດຂອງໂຮງຂ້າສັດ ແລະ ບ່ອນຂ້າສັດຍ່ອຍ ຖືກແບ່ງຕາມຄວາມອາດສາມາດຂອງການຂ້າສັດຕໍ່ວັນ ໂດຍກຳນົດອອກເປັນ ສີ່ ຂະໜາດ ດັ່ງນີ້:

1. ບ່ອນຂ້າສັດຍ່ອຍ ສຳລັບຂ້າສັດ ປະເພດ ງົວ, ຄວາຍ, ໝູ, ແກະ, ແບ້ ຊຶ່ງລວມກັນບໍ່ເກີນ ຊາວ (20) ໂຕຕໍ່ວັນ, ສຳລັບຂ້າສັດປີກ ບໍ່ເກີນ ໜຶ່ງຮ້ອຍ (100) ໂຕຕໍ່ວັນ;
2. ໂຮງຂ້າສັດຂະໜາດນ້ອຍ ສຳລັບຂ້າສັດ ປະເພດ ງົວ, ຄວາຍ, ໝູ, ແກະ, ແບ້ ຊຶ່ງລວມກັນມີຈຳນວນແຕ່ ຊາວເອັດ (21) ໂຕ ຫາ ຫົກສິບ (60) ໂຕຕໍ່ວັນ, ສຳລັບຂ້າສັດປີກ ແຕ່ ໜຶ່ງຮ້ອຍໜຶ່ງ (101) ໂຕ ຫາ ຫ້າຮ້ອຍ (500) ໂຕຕໍ່ວັນ;
3. ໂຮງຂ້າສັດຂະໜາດກາງ ສຳລັບຂ້າສັດ ປະເພດ ງົວ, ຄວາຍ, ໝູ, ແກະ, ແບ້ ຊຶ່ງລວມກັນມີຈຳນວນແຕ່ຫົກສິບເອັດ (61) ໂຕ ຫາ ໜຶ່ງຮ້ອຍຊາວ (120) ໂຕຕໍ່ວັນ, ສຳລັບຂ້າສັດປີກ ແຕ່ຫ້າຮ້ອຍໜຶ່ງ (501) ໂຕ ຫາ ສອງພັນຫ້າຮ້ອຍ (2500) ໂຕຕໍ່ວັນ;
4. ໂຮງຂ້າສັດຂະໜາດໃຫຍ່ ສຳລັບຂ້າສັດ ປະເພດ ງົວ, ຄວາຍ, ໝູ, ແກະ, ແບ້ ຊຶ່ງລວມກັນມີຈຳນວນແຕ່ ໜຶ່ງຮ້ອຍຊາວເອັດ (121) ໂຕຕໍ່ວັນ ຂຶ້ນໄປ, ສຳລັບຂ້າສັດປີກ ແຕ່ ສອງພັນຫ້າຮ້ອຍໜຶ່ງ (2.501) ໂຕຕໍ່ວັນ ຂຶ້ນໄປ.

**ມາດຕາ 9 ສະຖານທີ່ພັກສັດກ່ອນຂ້າ**

ສະຖານທີ່ພັກສັດກ່ອນຂ້າ ຕ້ອງປະຕິບັດ ດັ່ງນີ້:

1. ຕັ້ງຢູ່ໃກ້ກັບເຂດເປື້ອນຂອງອາຄານໂຮງຂ້າສັດ ຫຼື ບ່ອນຂ້າສັດຍ່ອຍ;
2. ມີໂຄງສ້າງຄອກສັດ ທີ່ທົນທານ, ມີທາງຍ່າງບັງຄັບສັດ ທີ່ມີຫຼັງຄາຄຸມ, ມີປະຕູ, ມີຮົ້ວກັ້ນທີ່ແຂງແກ່ນ ແລະ ມີບໍລິເວນຮັບສັດທີ່ເໝາະສົມ;
3. ມີພື້ນທີ່ພຽງພໍ ສຳລັບ ພັກສັດ ແລະ ກວດກາສຸຂະພາບສັດກ່ອນຂ້າ;
4. ມີສະຖານທີ່ແຍກສັດເຈັບປ່ວຍ ແລະ ມີຮ່ອງລະບາຍນ້ຳສະເພາະ ທີ່ບໍ່ໄຫຼຜ່ານຄອກພັກສັດ;
5. ມີລະບົບນ້ຳ ແລະ ອຸປະກອນໃຫ້ນ້ຳດື່ມທີ່ສະອາດ ແລະ ຮັບປະກັນ, ມີນ້ຳລ້າງຮ່າງກາຍສັດ ແລະ ຄອກສັດ ໃຫ້ສະອາດ, ມີອ່າງຂ້າເຊື້ອເກີບ;
6. ມີລະບົບລະບາຍນ້ຳເສຍທີ່ບໍ່ປົນກັບຮ່ອງລະບາຍນ້ຳຝົນ;
7. ມີສິ່ງອຳນວຍຄວາມສະດວກຢ່າງພຽງພໍ ເປັນຕົ້ນ ລະບົບລະບາຍອາກາດ, ລະບົບໃຫ້ແສງສະຫວ່າງ ແລະ ມີສະຖານທີ່ຈັດເກັບອາຈົມສັດ ແລະ ສິ່ງເສດເຫຼືອຢ່າງມີປະສິດທິພາບ;
8. ມີລະບົບບໍລິຫານຈັດການ ຕາມທີ່ກະຊວງກະສິກຳ ແລະ ປ່າໄມ້ ກຳນົດ.

**ມາດຕາ 10 ມາດຕະຖານ ແລະ ເງື່ອນໄຂ ຂອງໂຮງຂ້າສັດ ແລະ ບ່ອນຂ້າສັດຍ່ອຍ**

ມາດຕະຖານ ແລະ ເງື່ອນໄຂ ຂອງໂຮງຂ້າສັດ ແລະ ບ່ອນຂ້າສັດຍ່ອຍ ມີ ດັ່ງນີ້:

1. ມີພື້ນທີ່ພຽງພໍ, ບໍ່ສ້າງຜົນກະທົບຕໍ່ສິ່ງແວດລ້ອມ ແລະ ຕັ້ງຫ່າງຈາກວັດ, ໂບດ, ໂຮງໝໍ, ສຸກສາລາ, ຫໍພັກ, ສະຖານທີ່ລັດຖະການ, ສະຖານການສຶກສາ ຢ່າງໜ້ອຍ ຫ້າຮ້ອຍ (500) ແມັດ;
2. ມີ ຮົ້ວກັ້ນ, ລະບົບລະບາຍນ້ຳ, ບ່ອນພັກສັດກ່ອນຂ້າ, ທາງເຂົ້າຂອງສັດມີຊີວິດ ແລະ ທາງອອກຂອງຊີ້ນສັດ, ລະບົບປ້ອງກັນພະຍາດສັດ ແລະ ບ່ອນເກັບສິ່ງເສດເຫຼືອ;

3. ມີອາຄານທີ່ໝັ້ນຄົງ, ແຂງແຮງ, ກຳນົດເຂດສະອາດ ແລະ ເຂດເປື້ອນ, ມີສິ່ງອຳນວຍຄວາມສະດວກຢ່າງພຽງພໍ;
4. ມີພື້ນທີ່ແຂງແກ່ນ, ພືວລຽບກັນນ້ຳໄດ້, ມີຄວາມຄ້ອຍຊັນ, ຮອຍຕໍ່ລະຫວ່າງພື້ນກັບຝາ ແລະ ຮອຍຕໍ່ລະຫວ່າງຝາກັບເພດານ ເປັນມຸມໂຄ້ງ, ມີຝາດ້ານໃນທີ່ມີພືວລຽບ, ຄວາມສູງຂອງເພດານບໍ່ຕ່ຳກວ່າ ສາມ ແມັດ;
5. ມີຫ້ອງຂ້າສັດ ທີ່ປະກອບດ້ວຍ ຈຸດຂ້າສັດ, ຄົວສັດ ແລະ ຕັດແຕ່ງຊາກສັດ, ແຍກຊິ້ນ, ບັນຈຸ ແລະ ເກັບຮັກສາ, ບ່ອນຮັບສິ່ງຜະລິດຕະພັນສັດ ລວມທັງ ບ່ອນຄົວເຄື່ອງໃນ ແລະ ບ່ອນເກັບມ້ຽນເຄື່ອງມືອຸປະກອນ;
6. ມີການປ້ອງກັນການລະບາດຂອງພະຍາດ, ການສຸຂານາໄມ ແລະ ການບໍລິຫານຈັດການ ຕາມທີ່ກະຊວງກະສິກຳ ແລະ ປ່າໄມ້ ກຳນົດ.

**ມາດຕາ 11 ການປ້ອງກັນການລະບາດຂອງພະຍາດ ໃນໂຮງຂ້າສັດ ແລະ ບ່ອນຂ້າສັດຍ່ອຍ**

ການປ້ອງກັນການລະບາດຂອງພະຍາດ ໃນໂຮງຂ້າສັດ ແລະ ບ່ອນຂ້າສັດຍ່ອຍ ໃຫ້ປະຕິບັດ ດັ່ງນີ້:

1. ບໍ່ນຳເອົາສັດ ຫຼື ຜະລິດຕະພັນສັດ ຈາກແຫຼ່ງອື່ນ ເຂົ້າໄປໃນໂຮງຂ້າສັດ ຫຼື ບ່ອນຂ້າສັດຍ່ອຍ ນອກຈາກສັດທີ່ນຳມາຂ້າ ຫຼື ຜະລິດຕະພັນສັດ ທີ່ເປັນຜົນຜະລິດຂອງຕົນ;
2. ລ້າງ ແລະ ຂ້າເຊື້ອ ພາຫະນະຂົນສົ່ງສັດ ໃນບໍລິເວນທີ່ກຳນົດໄວ້;
3. ນຳສັດທີ່ມີສຸຂະພາບດີ ຫຼື ມາຈາກແຫຼ່ງທີ່ປອດເຊື້ອພະຍາດເຂົ້າມາຂ້າ;
4. ມີລະບົບ ດັກ, ກຳຈັດ ສັດທີ່ເປັນພາຫະຂອງພະຍາດ ເປັນຕົ້ນ ແມງໄມ້, ນົກ, ໜູ ແລະ ສັດມີພິດ. ໃນກໍລະນີຈຳເປັນນຳໃຊ້ສານເຄມີຂ້າແມງໄມ້ ຕ້ອງໃຊ້ຢ່າງປອດໄພ, ລະມັດລະວັງບໍ່ໃຫ້ປົນເປື້ອນກັບຜະລິດຕະພັນສັດ.

**ມາດຕາ 12 ມາດຕະການສຸຂານາໄມບຸກຄົນ ໃນໂຮງຂ້າສັດ ແລະ ບ່ອນຂ້າສັດຍ່ອຍ**

ມາດຕະການສຸຂານາໄມບຸກຄົນ ໃນໂຮງຂ້າສັດ ແລະ ບ່ອນຂ້າສັດຍ່ອຍ ຕ້ອງປະຕິບັດ ດັ່ງນີ້:

1. ມີການກວດສຸຂະພາບພະນັກງານຂ້າສັດປະຈຳປີ;
2. ບໍ່ອະນຸຍາດໃຫ້ບຸກຄົນ ທີ່ເປັນພະຍາດວັນນະໂລກ, ຕັບອັກເສບຕິດຕໍ່, ພະຍາດທາງເດີນຫາຍໃຈ, ເປັນພະຍາດຜິວໜັງຊ້ຳເຮື້ອ ຫຼື ເຈັບປ່ວຍ ເຂົ້າໃນໂຮງຂ້າສັດ ແລະ ບ່ອນຂ້າສັດຍ່ອຍ;
3. ພະນັກງານຂ້າສັດ ຕ້ອງຕັດເລັບມື, ນຸ່ງເຄື່ອງກັນເປື້ອນ, ໃສ່ຖົງມື, ໃສ່ໝວກ, ໃສ່ຜ້າອັດປາກ, ໃສ່ເກີບໂບກ ທີ່ໄດ້ຜ່ານການຂ້າເຊື້ອແລ້ວ ກ່ອນທີ່ຈະເຂົ້າໄປຫ້ອງຂ້າ ແລະ ຄົວສັດ;
4. ທຸກຄົນທີ່ຈະເຂົ້າໄປຫ້ອງຂ້າ ແລະ ຄົວສັດ ຕ້ອງລ້າງມືດ້ວຍສະບູ ແລະ ຂ້າເຊື້ອທຸກຄັ້ງ;
5. ແຂກມາຢ້ຽມຢາມ ໃຫ້ປະຕິບັດຕາມກົດລະບຽບ ຂອງໂຮງຂ້າສັດ ແລະ ບ່ອນຂ້າສັດຍ່ອຍ;
6. ມີປຶ້ມບັນທຶກ ປະຫວັດການເຈັບປ່ວຍຂອງຜູ້ອອກແຮງງານ ທີ່ຢູ່ພາຍໃຕ້ການຄຸ້ມຄອງຂອງຕົນ.

**ມາດຕາ 13 ມາດຕະການສຸຂານາໄມ ໃນໂຮງຂ້າສັດ ແລະ ບ່ອນຂ້າສັດຍ່ອຍ**

ມາດຕະການສຸຂານາໄມ ໃນໂຮງຂ້າສັດ ແລະ ບ່ອນຂ້າສັດຍ່ອຍ ຕ້ອງປະຕິບັດ ດັ່ງນີ້:

1. ອະນາໄມທຳຄວາມສະອາດ ຫ້ອງຂ້າ, ຫ້ອງຄົວສັດ ເປັນປະຈຳ ກ່ອນ ແລະ ຫຼັງການຂ້າສັດ;
2. ທຳຄວາມສະອາດ ແລະ ຂ້າເຊື້ອ ເຄື່ອງມື, ອຸປະກອນ, ໂຕະ, ເລື່ອຍ, ພາຊະນະບັນຈຸ ແລະ ເຄື່ອງໃຊ້ຕ່າງໆ ພາຍໃນໂຮງຂ້າສັດ ລະຫວ່າງ ການຂ້າສັດ ແລະ ຫຼັງການຂ້າສັດ;
3. ທຳຄວາມສະອາດ ແລະ ຂ້າເຊື້ອພາຫະນະຂົນສົ່ງ ທີ່ໃຊ້ບັນທຸກຜະລິດຕະພັນສັດທຸກຄັ້ງ;
4. ນຳໃຊ້ສານເຄມີທີ່ໄດ້ຮັບອະນຸຍາດ ໃຫ້ຖືກຕາມຄຳແນະນຳ ເພື່ອທຳຄວາມສະອາດ ແລະ ຂ້າເຊື້ອ;

5. ມີສະຖານທີ່ເກັບສານເຄມີ ທີ່ຢູ່ຫ່າງຈາກຫ້ອງ ຂ້າ, ຄອກສັດ ແລະ ສະຖານທີ່ເກັບຮັກສາຊີ້ນສັດ ໂດຍມີການແຍກຊະນິດ ຫຼື ປະເພດສານເຄມີ ແລະ ມີການຕິດຄຳເຕືອນໃຫ້ຊັດເຈນ;
6. ມີການມ້ຽນມັດ, ກຳຈັດຂີ້ເຫຍື້ອ ແລະ ສິ່ງເສດເຫຼືອທີ່ເໝາະສົມ ແລະ ຖືກຫຼັກອະນາໄມ;
7. ມີການຈັດການ ຫຼື ກຳຈັດທີ່ເໝາະສົມ ກັບສັດທີ່ຕິດພະຍາດ ຫຼື ຕາຍ;
8. ຕິດປ້າຍເຕືອນ ຫຼື ປ້າຍຫ້າມໃສ່ຈຸດທີ່ເປັນອັນຕະລາຍ.

**ມາດຕາ 14 ການຂົນສົ່ງສັດເພື່ອຂ້າ**

ການຂົນສົ່ງສັດເພື່ອຂ້າ ຕ້ອງຄຳນຶງເຖິງຫຼັກການສະຫວັດດີການສັດທີ່ດີ ໂດຍປະຕິບັດ ດັ່ງນີ້:

1. ພາຫະນະຂົນສົ່ງ ຕ້ອງເປັນພາຫະນະຂົນສົ່ງສັດສະເພາະ ໂດຍມີຂະໜາດເໝາະສົມກັບຊະນິດ ແລະ ຈຳນວນສັດ, ອາກາດສາມາດໄຫຼວຽນສະດວກ ແລະ ບໍ່ມີຄວາມສ່ຽງທີ່ຈະເຮັດໃຫ້ສັດ ບາດເຈັບ, ທໍລະມານ, ຕິດເຊື້ອພະຍາດ ຫຼື ເຮັດໃຫ້ສິ່ງເສດເຫຼືອຕົກເຮ່ຍ ອອກຈາກພາຫະນະ;
2. ສັດທີ່ຈະມີການຂົນສົ່ງນຳໄປຂ້າ ຕ້ອງຖືກງົດອາຫານ ຢູ່ໃນໄລຍະເວລາທີ່ເໝາະສົມ;
3. ການຂົນສົ່ງສັດທຸກຄັ້ງ ຕ້ອງມີເອກະສານການເຄື່ອນຍ້າຍສັດຢ່າງຄົບຖ້ວນ ແລະ ຕ້ອງມີການ ກວດກາສະພາບຂອງສັດ;
4. ກ່ອນນຳເອົາສັດເຂົ້າຂ້າ ຕ້ອງໄດ້ແຈ້ງຂໍ້ມູນກ່ຽວກັບສັດ ຕໍ່ພະນັກງານ ຫຼື ເຈົ້າໜ້າທີ່ ທີ່ຮັບຜິດ ຊອບ ກ່ຽວກັບ ການຂ້າສັດ ແລະ ກວດກາອະນາໄມຊີ້ນ ຕາມແບບພິມ ທີ່ກົມລ້ຽງສັດ ແລະ ການປະມົງ ກຳນົດ.

**ມາດຕາ 15 ການຮັບ ແລະ ພັກສັດ ຢູ່ບ່ອນພັກສັດກ່ອນຂ້າ**

ການຮັບ ແລະ ພັກສັດ ຢູ່ບ່ອນພັກສັດກ່ອນຂ້າ ຕ້ອງປະຕິບັດ ດັ່ງນີ້:

1. ນຳພາຫະນະຂົນສົ່ງສັດ ຜ່ານອ່າງຂ້າເຊື້ອຕີນລົດ;
2. ນຳສັດລົງຈາກພາຫະນະ ດ້ວຍຄວາມລະມັດລະວັງ;
3. ນຳສັດໄປເຂົ້າຄອກພັກ, ອະນາໄມ, ສີດລ້າງຮ່າງກາຍສັດໃຫ້ສະອາດ;
4. ໃຫ້ສັດງົດອາຫານ ຕາມໄລຍະເວລາທີ່ກຳນົດ. ໃນກໍລະນີ ງົດອາຫານເກີນກຳນົດເວລາ ຕ້ອງໃຫ້ ສັດກິນອາຫານທີ່ມີຄຸນນະພາບດີ, ບໍ່ມີຢາຕ້ານເຊື້ອ, ສານເລັ່ງຊີ້ນແດງ ຫຼື ສານທີ່ເປັນພິດ;
5. ບໍ່ອະນຸຍາດໃຫ້ນຳເອົາສັດອອກຈາກສະຖານທີ່ພັກສັດ ເວັ້ນເສຍແຕ່ໄດ້ຮັບອະນຸຍາດ ຈາກພະ ນັກງານ ຫຼື ເຈົ້າໜ້າທີ່ຮັບຜິດຊອບ ກ່ຽວກັບ ການຂ້າສັດ ແລະ ກວດກາອະນາໄມຊີ້ນ.

**ມາດຕາ 16 ການກວດກາສຸຂະພາບສັດກ່ອນຂ້າ**

ກ່ອນຂ້າສັດທຸກຄັ້ງ ຕ້ອງກວດກາສຸຂະພາບສັດ ດ້ວຍພະນັກງານກວດກາອະນາໄມຊີ້ນ ພາຍໃນກຳ ນົດເວລາ ຊາວສີ່ ຊົ່ວໂມງ ກ່ອນການຂ້າ ເປັນຕົ້ນ ກວດວັດແທກອຸນຫະພູມຮ່າງກາຍສັດ, ອາການ ແລະ ຮ່ອງ ຮອຍຂອງພະຍາດ.

ໃນກໍລະນີ ສົງໄສເກີດພະຍາດ, ຢູ່ໂຮງຂ້າສັດ, ບ່ອນຂ້າສັດຍ່ອຍ ຕ້ອງແຈ້ງຕໍ່ອົງການຄຸ້ມຄອງ ແລະ ກວດກາ ວຽກງານຂ້າສັດ ແລະ ກວດກາອະນາໄມຊີ້ນ ແລະ ດຳເນີນມາດຕະການຄວບຄຸມ ຕາມທີ່ກຳນົດໄວ້ ໃນກົດໝາຍ ແລະ ລະບຽບການ.

ໃນກໍລະນີ ພົບສັດມີອາການຜິດປົກກະຕິ ຕ້ອງປະຕິບັດ ດັ່ງນີ້:

1. ກັກສັດໄວ້ໃນສະຖານທີ່ແຍກປ່ຽວ;
2. ຊອກຫາສາເຫດ ແລະ ປິ່ນປົວ;
3. ເມື່ອສັດຫາຍດີເປັນປົກກະຕິ ແລະ ປອດໄພແລ້ວ ຈຶ່ງອະນຸຍາດໃຫ້ນຳເຂົ້າຂ້າ.

ຄ່າໃຊ້ຈ່າຍໃນການຕິດຕາມ ແລະ ປິ່ນປົວ ຕ້ອງແມ່ນເຈົ້າຂອງສັດ ເປັນຜູ້ຮັບຜິດຊອບ.

ໃນກໍລະນີ ພົບສັດຖືພາ ຫຼື ສັດທີ່ໄດ້ລົງທະບຽນເປັນສັດສະຫງວນພັນ ບໍ່ໃຫ້ນໍາເຂົ້າຂ້າ ແລະ ໃຫ້ປະຕິບັດຕາມ ມາດຕະການ ແລະ ລະບຽບການ ທີ່ກະຊວງກະສິກໍາ ແລະ ປ່າໄມ້ ກໍານົດ.

ໃນກໍລະນີ ທີ່ພະນັກງານກວດກາອະນາໄມຊີ້ນ ຫຼື ເຈົ້າໜ້າທີ່ສັດຕະວະແພດ ສົງໄສ ຫຼື ກວດພົບສັດ ທີ່ຈະນໍາເຂົ້າຂ້ານັ້ນ ເປັນພະຍາດສັດທີ່ຈໍາເປັນຕ້ອງແຈ້ງ ໃຫ້ສັ່ງໂຈະການຂ້າສັດ, ປະຕິບັດມາດຕະການຂ້າທໍາລາຍ ແລະ ຄວບຄຸມພະຍາດ ຕາມກົດໝາຍ ແລະ ລະບຽບການກໍານົດ ໂດຍແມ່ນເຈົ້າຂອງສັດຕ້ອງໄດ້ຮັບຜິດຊອບຕໍ່ຄ່າໃຊ້ຈ່າຍດັ່ງກ່າວ.

**ມາດຕາ 17 ສັດທີ່ບໍ່ເໝາະສົມສໍາລັບນໍາເຂົ້າຂ້າ**

ສັດທີ່ບໍ່ເໝາະສົມສໍາລັບການນໍາເຂົ້າຂ້າ ແມ່ນສັດທີ່ສະແດງອາການ ຫຼື ເປັນພະຍາດ ເປັນຕົ້ນພະຍາດວັນນະໂຣກ, ພະຍາດໄຂ້ເລືອດດໍາ, ພະຍາດເຕົ້າໂຮມເລືອດ, ພະຍາດປາກເປື່ອຍລົງເລັບ, ພະຍາດວໍ້, ພະຍາດແທ້ງຕິດຕໍ່, ພະຍາດຜີ້ງດັງອັກເສບຕິດຕໍ່, ພະຍາດບາດທະຍັກ, ພະຍາດໄຂ້ບວມ, ພະຍາດປານແດງໝູ, ພະຍາດອະຫິວາໝູອາຟຣິກາ, ອະຫິວາໝູ, ພະຍາດຫູກໍ່າໝູ, ໝູທີ່ມີອາການໄຂ້ສູງເກີນ ສີ່ສິບເອັດ ອົງສາເຊ, ງົວ, ຄວາຍ ທີ່ມີອາການໄຂ້ສູງເກີນ ສີ່ສິບຈຸດຫ້າ ອົງສາເຊ, ສັດມີອາການບວມທັງໂຕ, ສັດຈ່ອຍຜອມ ໜັງຕິດດູກ, ສັດເປັນແຜ ຫຼື ຕຸ່ມຝີ ທົ່ວໂຕ, ສັດທີ່ຫາກໍ່ຮັບວັກຊີນ ບໍ່ເກີນ ຊາວເອັດ ວັນ, ສັດຖືພາມານ ຫຼື ສັດຫາກໍ່ເກີດລູກໃໝ່. ກະຊວງກະສິກໍາ ແລະ ປ່າໄມ້ ເປັນຜູ້ກໍານົດສັດທີ່ບໍ່ເໝາະສົມ ສໍາລັບການນໍາເຂົ້າຂ້າໃນແຕ່ລະໄລຍະ.

**ມາດຕາ 18 ຂັ້ນຕອນການຂ້າສັດ**

ຂັ້ນຕອນການຂ້າສັດ ຕ້ອງປະຕິບັດ ດັ່ງນີ້:

1. ເຮັດໃຫ້ສັດສະຫຼົບ ເປັນຕົ້ນ ຊ໊ອດດ້ວຍໄຟຟ້າ, ຍິງດ້ວຍປືນຂ້າສັດສະເພາະ, ຣົມດ້ວຍອາຍແກັສ ຫຼື ຕີຈຸດສະຫຼົບ;
2. ກວດກາການຕອບສະໜອງຂອງສັດ ຫຼັງຈາກເຮັດໃຫ້ສັດສະຫຼົບ;
3. ເຈາະເອົາເລືອດອອກຈາກຮ່າງກາຍສັດ;
4. ເກັບ ແລະ ຮັກສາເລືອດໄວ້ໃນພາຊະນະທີ່ສະອາດ ແລະ ສະຖານທີ່ ທີ່ເໝາະສົມ;
5. ລ້າງບໍລິເວນຂ້າສັດໃຫ້ສະອາດ.

**ມາດຕາ 19 ການຄົວສັດ**

ການຄົວສັດ ຕ້ອງປະຕິບັດ ຕາມຂັ້ນຕອນ ທີ່ເໝາະສົມ ດັ່ງນີ້:

1. ເອົາຂົນອອກ ຫຼື ລອກໜັງ;
2. ຕັດຕີນ, ຕັດຫົວ;
3. ເອົາເຄື່ອງໃນອອກ;
4. ລ້າງຊາກ, ຜ່າຊາກ ຫຼື ຜ່າຊີກ;
5. ຄົວເຄື່ອງໃນ;
6. ແຍກຊີ້ນ.

**ມາດຕາ 20 ການຍົກເວັ້ນການຂໍອະນຸຍາດຂ້າສັດ**

ການຂ້າສັດທີ່ບໍ່ຈໍາເປັນຕ້ອງຂໍອະນຸຍາດກ່ອນຂ້າ ມີ ດັ່ງນີ້:

1. ການຂ້າສັດ ເພື່ອບໍລິໂພກພາຍໃນຄອບຄົວ ເປັນຕົ້ນ ງານບຸນ, ງານດອງ;
2. ການຂ້າສັດ ທີ່ມີພຶດຕິກໍາຮ້າຍ, ສັດແທທີ່ບໍ່ສາມາດຈັບມາຂ້າໃນໂຮງຂ້າສັດ ຫຼື ບ່ອນຂ້າສັດຍ່ອຍ;
3. ການຂ້າສັດ ເພື່ອການຄົ້ນຄວ້າວິໄຈທາງດ້ານວິຊາການ.

ການຂ້າສັດດັ່ງທີ່ກຳນົດໄວ້ໃນ ຂໍ້ 1 ແລະ 2 ຕ້ອງແຈ້ງໃຫ້ອົງການປົກຄອງບ້ານຊາບ ແລະ ດຳເນີນການຂ້າສັດ ໂດຍວິທີທີ່ຖືກຫຼັກສຸຂານາໄມ, ພ້ອມກັນນັ້ນກໍຕ້ອງ ເກັບມ້ຽນ, ກຳຈັດສິ່ງເສດເຫຼືອຈາກການຂ້າສັດ ບໍ່ໃຫ້ມີຜົນກະທົບຕໍ່ສຸຂະພາບ, ສັງຄົມ ແລະ ສິ່ງແວດລ້ອມ.

## ໝວດທີ 3
## ການກວດກາອະນາໄມຊີ້ນ

### ມາດຕາ 21 ການກວດກາອະນາໄມຊີ້ນ

ການກວດກາອະນາໄມຊີ້ນ ຕ້ອງດຳເນີນໂດຍພະນັກງານກວດກາອະນາໄມຊີ້ນ ທຸກຄັ້ງ.

ໃນກໍລະນີ ສົງໄສຊາກ ຫຼື ພາກສ່ວນໃດໜຶ່ງຂອງຊາກສັດ ຜິດປົກກະຕິ ພະນັກງານກວດກາອະນາໄມຊີ້ນ ຕ້ອງກັກໄວ້ ພ້ອມທັງເກັບຕົວຢ່າງສິ່ງໄປວິໄຈ ແລະ ໃຫ້ເຮັດກາ ຫຼື ເຮັດເຄື່ອງໝາຍເຕືອນ.

ໃນກໍລະນີ ຫາກພົບຊາກ ຫຼື ພາກສ່ວນໃດໜຶ່ງຂອງຊາກສັດ ບໍ່ປອດໄພສຳລັບການບໍລິໂພກ ຕ້ອງປະຕິບັດຕາມມາດຕະການ ທີ່ກະຊວງກະສິກຳ ແລະ ປ່າໄມ້ ກຳນົດ.

ພາຍຫຼັງທີ່ໄດ້ຮັບການຢັ້ງຢືນວ່າ ພົບພະຍາດສັດທີ່ຈຳເປັນຕ້ອງແຈ້ງ ໃຫ້ປະຕິບັດຕາມມາດຕະການ ທີ່ກະຊວງກະສິກຳ ແລະ ປ່າໄມ້ ກຳນົດ.

### ມາດຕາ 22 ການຢັ້ງຢືນຜົນການກວດກາອະນາໄມຊີ້ນ

ການຢັ້ງຢືນຜົນການກວດກາອະນາໄມຊີ້ນ ຕ້ອງປະຕິບັດ ດັ່ງນີ້:

1. ຈ້ຳຕາມົນ ໃນກໍລະນີຢັ້ງຢືນວ່າຜ່ານ ເໝາະສົມສຳລັບການບໍລິໂພກ;
2. ຈ້ຳຕາສາມຫຼ່ຽມ ໃນກໍລະນີຢັ້ງຢືນວ່າຜ່ານ ແຕ່ຕ້ອງປຸງແຕ່ງໃຫ້ສຸກ ກ່ອນນຳໄປບໍລິໂພກ;
3. ຈ້ຳຕາສີ່ຫຼ່ຽມ ໃນກໍລະນີຢັ້ງຢືນວ່າບໍ່ຜ່ານ ຕ້ອງນຳໄປທຳລາຍຖິ້ມ.

### ມາດຕາ 23 ຕາຈ້ຳຊີ້ນ

ຕາຈ້ຳຊີ້ນ ຕ້ອງມີ ຊະນິດ, ຂະໜາດ, ເຄື່ອງໝາຍ ແລະ ສີ ຕາມທີ່ກະຊວງກະສິກຳ ແລະ ປ່າໄມ້ ກຳນົດ ເພື່ອນຳໃຊ້ເຂົ້າໃນການຢັ້ງຢືນການກວດກາອະນາໄມຊີ້ນ ຢ່າງເປັນເອກະພາບໃນຂອບເຂດທົ່ວປະເທດ.

ຕາຈ້ຳຊີ້ນ ຕ້ອງປະກອບໃຫ້ສະເພາະພະນັກງານກວດກາອະນາໄມຊີ້ນ ທີ່ໄດ້ຮັບການແຕ່ງຕັ້ງຈາກອົງການຄຸ້ມຄອງ ແລະ ກວດກາ ວຽກງານຂ້າສັດ ແລະ ກວດກາອະນາໄມຊີ້ນ.

ນ້ຳມຶກທີ່ນຳໃຊ້ເພື່ອຈ້ຳຊີ້ນນັ້ນ ຕ້ອງແມ່ນນ້ຳມຶກສະເພາະ ທີ່ບໍ່ມີຜົນສະທ້ອນ ຕໍ່ຄຸນນະພາບຂອງຊີ້ນ, ບໍ່ມີກິ່ນ ແລະ ຕ້ອງບໍ່ເປັນອັນຕະລາຍຕໍ່ສຸຂະພາບຂອງຜູ້ບໍລິໂພກ.

### ມາດຕາ 24 ຜະລິດຕະພັນສັດ ທີ່ບໍ່ເໝາະສົມສຳລັບບໍລິໂພກ

ຜະລິດຕະພັນສັດ ທີ່ບໍ່ເໝາະສົມສຳລັບບໍລິໂພກ ມີ ດັ່ງນີ້:

1. ຈາກສັດຕາຍໂດຍບໍ່ຮູ້ສາເຫດ ຫຼື ເປັນພະຍາດລະບາດ;
2. ເປັນພະຍາດ ແລະ ພົບອາການ ຕາມທີ່ກຳນົດຢູ່ໃນມາດຕາ 17 ຂອງດຳລັດສະບັບນີ້;
3. ເປັນສີເຫຼືອງຍ້ອນພະຍາດບີຮື່ວ;
4. ມີອາການຊຶມເຊື້ອ ຫຼື ເລືອດເປັນພິດ;
5. ມີເມັດສານ ຫຼື ມີແມ່ກາຝາກຝັງຢູ່ທົ່ວໄປ;
6. ມີສີຊ້ຳ ຫຼື ມີເລືອດຄ້າງ;
7. ເປັນແຜ, ຝີ ຫຼື ຈຸດເນົ່າເປື່ອຍ;
8. ເປັນກ້ອນອັກເສບ ຫຼື ເປັນກະດັນແຂງ;
9. ມີກິ່ນປັດສະວະ ຫຼື ມີກິ່ນຢາ;

10. ບໍ່ສະອາດ, ບໍ່ສົດ ຫຼື ມີສີດໍາເນົ່າເໝັນ.

ຖ້າພົບຜະລິດຕະພັນສັດ ທີ່ກ່າວມາຂ້າງເທິງ ໃຫ້ທໍາລາຍ ຫຼື ຈັດໃຫ້ເປັນຜະລິດຕະພັນສັດສໍາຮອງ ທີ່ບໍ່ເໝາະສົມສໍາລັບບໍລິໂພກ ເພື່ອນໍາໄປໃຊ້ປະໂຫຍດອື່ນ ແລ້ວແຕ່ລະກໍລະນີ ແຕ່ກ່ອນຈະນໍາອອກຈາກໂຮງຂ້າສັດ ຫຼື ບ່ອນຂ້າສັດຍ່ອຍ ຕ້ອງໄດ້ຮັບອະນຸຍາດ ຈາກພະນັກງານກວດກາອະນາໄມຊີ້ນ ແລະ ສັດຕະວະແພດທີ່ໄດ້ຮັບມອບໝາຍເສຍກ່ອນ.

## ໝວດທີ 4
## ການຕັດແຕ່ງຊາກ, ການເກັບຮັກສາ ແລະ ການຈໍາໜ່າຍຜະລິດຕະພັນສັດ

### ມາດຕາ 25 ການຕັດແຕ່ງຊາກ ແລະ ແຍກຊີ້ນ

ການຕັດແຕ່ງຊາກ ແລະ ແຍກຊີ້ນ ໃຫ້ປະຕິບັດຫຼັງການລ້າງຊາກ ຫຼື ຫຼັງການຫຼຸດອຸນຫະພູມຊາກແລ້ວ ໂດຍໃຫ້ຜູ້ຕັດແຕ່ງໃສ່ເຄື່ອງກັນເປື້ອນ ແລະ ປະຕິບັດຫຼັກການສຸຂານາໄມສ່ວນບຸກຄົນຢ່າງເຄັ່ງຄັດ.

ການຕັດແຕ່ງຊາກອຸ່ນ ຄວນເຮັດໃຫ້ສໍາເລັດ ພາຍໃນກໍານົດເວລາ ສີ່ສິບຫ້າ ຫາ ເກົ້າສິບ(45-90) ນາທີ. ຖ້າເກີນໄລຍະເວລາດັ່ງກ່າວ ຕ້ອງນໍາໄປເກັບໄວ້ໃນຫ້ອງເຢັນ ໂດຍໃຫ້ປະຕິບັດຕາມຄູ່ມື ທີ່ກະຊວງກະສິກໍາ ແລະ ປ່າໄມ້ ກໍານົດ.

ມີດ, ເຄື່ອງມື ຫຼື ອຸປະກອນທີ່ໃຊ້ໃນການຕັດແຕ່ງຊາກ ຫຼື ແຍກຊີ້ນ ລວມທັງ ພາຊະນະບັນຈຸ ຫຼື ຫຸ້ມຫໍ່ ຕ້ອງລ້າງທໍາຄວາມສະອາດ ແລະ ຂ້າເຊື້ອທັງກ່ອນ ແລະ ຫຼັງໃຊ້ງານ.

### ມາດຕາ 26 ການເກັບຮັກສາ ແລະ ການປຸງແຕ່ງ ຜະລິດຕະພັນສັດ

ການເກັບຮັກສາ ແລະ ການປຸງແຕ່ງ ຜະລິດຕະພັນສັດ ຕ້ອງຮັບປະກັນດ້ານຄວາມສະອາດ ແລະ ຄວາມປອດໄພຕໍ່ຜູ້ບໍລິໂພກ. ສະຖານທີ່ເກັບຮັກສາ ແລະ ປຸງແຕ່ງ ຕ້ອງປະຕິບັດຕາມມາດຕະຖານເຕັກນິກ ທີ່ກະຊວງກະສິກໍາ ແລະ ປ່າໄມ້ ກໍານົດ. ຊາກສັດທີ່ຕ້ອງການຫຼຸດອຸນຫະພູມຊາກກ່ອນຈໍາໜ່າຍ ຕ້ອງເກັບໄວ້ໃນຫ້ອງເຢັນທີ່ມີອຸນຫະພູມ ສູນ ຫາ ສີ່ ອົງສາເຊ ເປັນເວລາ ສິບແປດ ຫາ ຊາວສີ່ (18-24) ຊົ່ວໂມງ ແລະ ຕ້ອງໃຫ້ຈຸດໃຈກາງຂອງຊາກ ມີອຸນຫະພູມຢູ່ລະຫວ່າງ ສີ່ ຫາ ເຈັດ ອົງສາເຊ.

### ມາດຕາ 27 ການບັນຈຸ, ຕິດສະຫຼາກ ແລະ ຫຸ້ມຫໍ່ ຜະລິດຕະພັນສັດ

ຜະລິດຕະພັນສັດ ຕ້ອງບັນຈຸໄວ້ໃນພາຊະນະທີ່ ຮັບປະກັນໃໝ່, ສະອາດ, ປອດໄພ ແລະ ຕິດສະຫຼາກເປັນ ພາສາລາວ ແລະ ພາສາຕ່າງປະເທດ ທີ່ຊັດເຈນ ໂດຍຕ້ອງມີຂໍ້ມູນ ດັ່ງນີ້:

1. ຊື່ຜະລິດຕະພັນ;
2. ລະຫັດຂອງຜະລິດຕະພັນ;
3. ເຄື່ອງໝາຍການຄ້າ;
4. ຊື່ ແລະ ທີ່ຢູ່ ຂອງໂຮງປຸງແຕ່ງ;
5. ນໍ້າໜັກ ຕາມລະບົບເມຕຣິກ;
6. ນໍ້າເບີຊຸດການຜະລິດ;
7. ວັນເດືອນປີ ຂ້າ ຫຼື ຜະລິດ ແລະ ວັນໝົດອາຍຸ;
8. ວິທີການເກັບຮັກສາ ແລະ ນໍາໃຊ້.

ສິ່ງຫຸ້ມຫໍ່ຜະລິດຕະພັນສັດ ຕ້ອງບໍ່ສີກຂາດ ເພື່ອບໍ່ໃຫ້ເກີດການປົນເປື້ອນ, ຖ້າເປັນຜະລິດຕະພັນຈໍານວນຫຼາຍທີ່ບໍ່ສາມາດຕິດສະຫຼາກໄດ້ ຕ້ອງມີເອກະສານກໍາກັບທີ່ມີຂໍ້ມູນດັ່ງກ່າວຢ່າງຄົບຖ້ວນ.

### ມາດຕາ 28 ການຂົນສົ່ງຜະລິດຕະພັນສັດໄປຈໍາໜ່າຍ

ການຂົນສົ່ງຜະລິດຕະພັນສັດໄປຈໍາໜ່າຍ ຕ້ອງນໍາໃຊ້ພາຫະນະຂົນສົ່ງທີ່ຮັບປະກັນ, ປ້ອງກັນບໍ່ໃຫ້ຜະລິດຕະພັນສັດ ສໍາພັດກັບ ລົມ, ຝົນ, ແສງແດດ ຫຼື ຝຸ່ນລະອອງ ພາຊະນະບັນຈຸ ຕ້ອງສະອາດ ແລະ ບໍ່ໃຫ້

ວາງຜະລິດຕະພັນສັດ ສຳພັດ ກັບພື້ນພາຫະນະໂດຍກົງ. ລົດຂົນສົ່ງຊີ້ນທີ່ມີລະບົບຄວາມເຢັນ ຕ້ອງຄວບຄຸມອຸນຫະພູມບໍ່ໃຫ້ເກີນ ສີ່ ອົງສາເຊ. ພາຊະນະ, ອຸປະກອນ ແລະ ພາຫະນະ ສຳລັບການຂົນສົ່ງ ຕ້ອງມີການລ້າງທຳຄວາມສະອາດ ແລະ ຂ້າເຊື້ອທຸກຄັ້ງ ກ່ອນ ແລະ ຫຼັງ ການຂົນສົ່ງ.

**ມາດຕາ 29 ການຈຳໜ່າຍຜະລິດຕະພັນສັດ**

ການຈຳໜ່າຍຜະລິດຕະພັນສັດ ຕ້ອງປະຕິບັດຕາມຫຼັກການສຸຂານາໄມ ດັ່ງນີ້:

1. ໂຕະວາງຂາຍ ຕ້ອງເຮັດດ້ວຍວັດຖຸທີ່ບໍ່ເຂົ້າໜັງງ ທຳຄວາມສະອາດໄດ້ງ່າຍ, ຄວາມສູງຂອງໂຕະຈາກພື້ນ ຢ່າງໜ້ອຍ ແປດສິບ (80) ຊັງຕີແມັດ ແລະ ຕ້ອງທຳຄວາມສະອາດທຸກຄັ້ງ ທັງກ່ອນ ແລະ ພາຍຫຼັງສຳເລັດການວາງຂາຍແລ້ວ;
2. ຜະລິດຕະພັນສັດທີ່ວາງຂາຍ ຕ້ອງມີໃບນຳສົ່ງຊີ້ນ ທີ່ອອກໂດຍພະນັກງານກວດກາອະນາໄມຊີ້ນທີ່ຖືກແຕ່ງຕັ້ງ ໃຫ້ປະຈຳໂຮງຂ້າສັດ ຫຼື ບ່ອນຂ້າສັດຍ່ອຍ;
3. ຜະລິດຕະພັນສັດ ທີ່ວາງຂາຍຢູ່ຕະຫຼາດ ຕ້ອງຫ້ອຍໄວ້ດ້ວຍຂໍເກາະທີ່ບໍ່ເຂົ້າໜັງງ. ໃນກໍລະນີວາງຂາຍຢູ່ເທິງໂຕະ ຕ້ອງວາງຊີ້ນ ແລະ ເຄື່ອງໃນ ບໍ່ໃຫ້ປົນກັນ ແລະ ໃຫ້ນຳໃຊ້ເຄື່ອງມືເພື່ອປ້ອງກັນບໍ່ໃຫ້ແມງວັນ ຫຼື ສັດອື່ນ ທີ່ເປັນພາຫະຂອງພະຍາດສາມາດ ຕອມ ຫຼື ສຳພັດໄດ້;
4. ຜະລິດຕະພັນສັດທີ່ວາງຂາຍຢູ່ຮ້ານສັບພະສິນຄ້າ ຫຼື ຮ້ານຂາຍຊີ້ນສະເພາະ ຕ້ອງມີການຫຸ້ມຫໍ່ທີ່ຖືກຕາມຫຼັກການສຸຂານາໄມ ແລະ ຕ້ອງຕິດສະຫຼາກທີ່ບົ່ງບອກເຖິງ ນ້ຳໜັກ, ລາຄາ, ວັນທີຫຸ້ມຫໍ່, ຊະນິດ, ປະເພດ ແລະ ແຫຼ່ງທີ່ມາຂອງຊີ້ນ ຫຼື ຜະລິດຕະພັນສັດ. ໃນກໍລະນີ ບ່ອນວາງຂາຍຢູ່ໃນຕູ້ແຊ່ແຂງ ຕ້ອງມີອຸນຫະພູມ ລົບຊາວ ອົງສາເຊ ຫຼື ຖ້າເປັນຕູ້ແກ້ວຕ້ອງຮັກສາອຸນຫະພູມລະຫວ່າງ ສູນ ຫາ ສີ່ ອົງສາເຊ;
5. ຜູ້ຈຳໜ່າຍຜະລິດຕະພັນສັດ ຕ້ອງເປັນຜູ້ທີ່ມີສຸຂະພາບແຂງແຮງດີ ບໍ່ມີພະຍາດຕິດແປດ, ຮັກສາຄວາມສະອາດ, ໃສ່ຊຸດຂາຍຊີ້ນ, ຕັດເລັບ ແລະ ລ້າງມືທຸກຄັ້ງ ທັງກ່ອນ ແລະ ຫຼັງ ການສຳພັດກັບຜະລິດຕະພັນສັດ ແລະ ຫຼັງການເຂົ້າຫ້ອງນ້ຳ.

**ມາດຕາ 30 ສັດ ຫຼື ຜະລິດຕະພັນສັດ ທີ່ຕາຍຍ້ອນອຸປະຕິເຫດ**

ສັດ ຫຼື ຜະລິດຕະພັນສັດ ທີ່ຕາຍຍ້ອນອຸປະຕິເຫດ ຕ້ອງແຈ້ງໃຫ້ອົງການປົກຄອງບ້ານ ເພື່ອກວດກາ ແລະ ບັນທຶກ, ຖ້າຫາກເຫັນວ່າ ສັດ ຫຼື ຜະລິດຕະພັນສັດ ທີ່ຕາຍຍ້ອນອຸປະຕິເຫດ ບໍ່ຕິດເຊື້ອ ຫຼື ບໍ່ມີອາການຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 17 ຂອງດຳລັດສະບັບນີ້ ກໍສາມາດຈຳໜ່າຍໄດ້.

## ໝວດທີ 5
## ການດຳເນີນທຸລະກິດ ກ່ຽວກັບ ການຂ້າສັດ

**ມາດຕາ 31 ການດຳເນີນທຸລະກິດ ກ່ຽວກັບ ການຂ້າສັດ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ທີ່ມີຈຸດປະສົງດຳເນີນທຸລະກິດກ່ຽວກັບ ການຂ້າສັດ ຕ້ອງຍື່ນຄຳຮ້ອງ ພ້ອມເອກະສານຄົບຊຸດ ຕໍ່ຂະແໜງການອຸດສາຫະກຳ ແລະ ການຄ້າຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍວິສາຫະກິດ, ພາຍຫຼັງທີ່ໄດ້ໃບທະບຽນວິສາຫະກິດແລ້ວ ຕ້ອງຂໍອະນຸຍາດດຳເນີນທຸລະກິດ ກ່ຽວກັບ ການຂ້າສັດ ນຳຂະແໜງການກະສິກຳ ແລະ ປ່າໄມ້.

**ມາດຕາ 32 ເງື່ອນໄຂຂອງຜູ້ດຳເນີນທຸລະກິດ ກ່ຽວກັບ ການຂ້າສັດ**

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ທີ່ມີຈຸດປະສົງດຳເນີນທຸລະກິດກ່ຽວກັບ ການຂ້າສັດ ຕ້ອງມີເງື່ອນໄຂ ດັ່ງນີ້:

1. ມີທີ່ດິນ, ທຶນ, ສຳນັກງານ, ສິ່ງປຸກສ້າງ, ວັດຖຸປະກອນ, ພາຫະນະຮັບໃຊ້;

2. ມີພະນັກງານ ຜູ້ຮັບຜິດຊອບຄວບຄຸມໂຮງຂ້າສັດ ທີ່ມີຄວາມຮູ້ລະດັບປະລິນຍາຕີ ກ່ຽວກັບ ການລ້ຽງສັດ, ການສັດຕະວະແພດ ແລະ ສາຂາອື່ນ ທີ່ກ່ຽວຂ້ອງ;
3. ມີຜູ້ຂ້າສັດທີ່ຜ່ານການຝຶກອົບຮົມ ກ່ຽວກັບ ການຂ້າສັດ;
4. ມີເງື່ອນໄຂອື່ນທີ່ຈຳເປັນ ຕາມການກຳນົດ ຂອງກະຊວງກະສິກຳ ແລະ ປ່າໄມ້.

**ມາດຕາ 33 ເອກະສານປະກອບການຂໍອະນຸຍາດ**

ເອກະສານປະກອບການຂໍອະນຸຍາດດຳເນີນທຸລະກິດ ກ່ຽວກັບ ການຂ້າສັດ ມີດັ່ງນີ້:

1. ໃບຄຳຮ້ອງ ຕາມແບບພິມ ທີ່ກົມລ້ຽງສັດ ແລະ ການປະມົງ ກຳນົດ;
2. ສຳເນົາ ບັດປະຈຳຕົວ ຫຼື ປຶ້ມສຳມະໂນຄົວ, ສຳເນົາໜັງສືຜ່ານແດນ ຖ້າເປັນຄົນຕ່າງປະເທດ;
3. ສຳເນົາ ໃບທະບຽນວິສາຫະກິດ ຫຼື ໃບອະນຸຍາດການລົງທຶນ;
4. ບົດວິພາກເສດຖະກິດເຕັກນິກ ແລະ ບົດສຶກສາຄວາມເປັນໄປໄດ້;
5. ໃບຢັ້ງຢືນກຳມະສິດ ຫຼື ສັນຍາເຊົ່າທີ່ດິນ;
6. ໃບຢັ້ງຢືນສິ່ງແວດລ້ອມ ຈາກຂະແໜງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ;
7. ໃບຢັ້ງຢືນແບບການກໍ່ສ້າງ ຈາກຂະແໜງການໂຍທາທິການ ແລະ ຂົນສົ່ງ;
8. ເອກະສານອື່ນທີ່ຈຳເປັນ ຕາມການຮຽກຮ້ອງຂອງຂະແໜງການກະສິກຳ ແລະ ປ່າໄມ້.

**ມາດຕາ 34 ການອະນຸມັດໃຫ້ລົງມືກໍ່ສ້າງໂຮງຂ້າສັດ ຫຼື ບ່ອນຂ້າສັດຍ່ອຍ**

ພາຍຫຼັງໄດ້ຮັບສຳນວນເອກະສານຢ່າງຖືກຕ້ອງ, ຄົບຖ້ວນ ຕາມມາດຕາ 33 ແລະ ໄດ້ຜ່ານການກວດກາສະຖານທີ່ຕົວຈິງແລ້ວ, ອົງການຄຸ້ມຄອງ ແລະ ກວດກາ ວຽກງານຂ້າສັດ ແລະ ກວດກາອະນາໄມຊີ້ນ ຈະອອກໃບອະນຸມັດລົງມືກໍ່ສ້າງໃຫ້ແກ່ຜູ້ຂໍອະນຸຍາດ ພາຍໃນກຳນົດເວລາ ຫ້າ ວັນ ລັດຖະການ ຕາມແຕ່ລະກໍລະນີ ດັ່ງນີ້:

ລັດຖະມົນຕີກະຊວງກະສິກຳ ແລະ ປ່າໄມ້ ອອກໃບອະນຸມັດລົງມືກໍ່ສ້າງ ສຳລັບ ໂຮງຂ້າສັດຂະໜາດນ້ອຍ ຂຶ້ນໄປ;

ເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ ອອກໃບອະນຸມັດລົງມືກໍ່ສ້າງ ສຳລັບ ບ່ອນຂ້າສັດຍ່ອຍ;

ໃນກໍລະນີທີ່ມີ ການຕໍ່ເຕີມ, ສ້າງເພີ່ມ ຫຼື ຂະຫຍາຍໂຮງຂ້າສັດ ຫຼື ບ່ອນຂ້າສັດຍ່ອຍ ໃຫ້ປະຕິບັດຕາມຂັ້ນຕອນ ທີ່ໄດ້ກຳນົດໄວ້ໃນດຳລັດສະບັບນີ້.

**ມາດຕາ 35 ການລາຍງານຄວາມຄືບໜ້າຂອງການກໍ່ສ້າງ**

ຜູ້ໄດ້ຮັບອະນຸມັດໃຫ້ລົງມືກໍ່ສ້າງໂຮງຂ້າສັດ ຫຼື ບ່ອນຂ້າສັດຍ່ອຍ ຕ້ອງລາຍງານໃຫ້ອົງການຄຸ້ມຄອງ ແລະ ກວດກາ ວຽກງານຂ້າສັດ ແລະ ກວດກາອະນາໄມຊີ້ນ ຊາບ ຢ່າງໜ້ອຍ ສາມຄັ້ງ ດັ່ງນີ້:

1. ຄັ້ງທຳອິດ ເມື່ອຜູ້ຂໍອະນຸຍາດໄດ້ດຳເນີນການກໍ່ສ້າງສຳເລັດ ສາມສິບ (30) ສ່ວນຮ້ອຍ;
2. ຄັ້ງທີສອງ ເມື່ອຜູ້ຂໍອະນຸຍາດໄດ້ດຳເນີນການກໍ່ສ້າງສຳເລັດ ຫົກສິບ (60) ສ່ວນຮ້ອຍ;
3. ຄັ້ງສຸດທ້າຍ ເມື່ອຜູ້ຂໍອະນຸຍາດໄດ້ດຳເນີນການກໍ່ສ້າງສຳເລັດ ຮ້ອຍ (100) ສ່ວນຮ້ອຍ.

**ມາດຕາ 36 ການອອກໃບອະນຸຍາດດຳເນີນທຸລະກິດກ່ຽວກັບການຂ້າສັດ**

ພາຍຫຼັງທີ່ມີການກວດກາ ການກໍ່ສ້າງ ໂຮງຂ້າສັດ ຫຼື ບ່ອນຂ້າສັດຍ່ອຍ ແລະ ຜ່ານໄລຍະທົດລອງແລ້ວ ອົງການຄຸ້ມຄອງ ແລະ ກວດກາ ວຽກງານຂ້າສັດ ແລະ ກວດກາອະນາໄມຊີ້ນ ຕ້ອງອອກໃບອະນຸຍາດດຳເນີນທຸລະກິດ ກ່ຽວກັບ ການຂ້າສັດ ໃຫ້ແກ່ຜູ້ຂໍອະນຸຍາດ ພາຍໃນກຳນົດເວລາ ຫ້າ ວັນລັດຖະການ ຕາມແຕ່ລະກໍລະນີ ດັ່ງນີ້:

ກົມລ້ຽງສັດ ແລະ ການປະມົງ ອອກໃບອະນຸຍາດດຳເນີນທຸລະກິດ ກ່ຽວກັບ ການຂ້າສັດ ສຳລັບ ໂຮງຂ້າສັດຂະໜາດນ້ອຍຂຶ້ນໄປ;

ພະແນກກະສິກຳ ແລະ ປ່າໄມ້ ຂັ້ນແຂວງ ອອກໃບອະນຸຍາດດຳເນີນທຸລະກິດ ກ່ຽວກັບ ການຂ້າສັດ ສຳລັບບ່ອນຂ້າສັດຍ່ອຍ.

**ມາດຕາ 37 ການນຳໃຊ້ໃບອະນຸຍາດ**

ໃບອະນຸຍາດດຳເນີນທຸລະກິດ ກ່ຽວກັບ ການຂ້າສັດ ສາມາດນຳໃຊ້ເປັນເອກະສານສະແດງ ສຳລັບ ການຈຳໜ່າຍຊາກສັດ ແລະ ຜະລິດຕະພັນສັດ ທີ່ຕົນເອງຜະລິດ ລວມທັງ ສາມາດນຳໃຊ້ ສຳລັບ ການນຳເຂົ້າ ວັດຖຸປະກອບ ເພື່ອນຳມາຂະຫຍາຍການກໍ່ສ້າງ ແລະ ດຳເນີນການຂ້າສັດ ແຕ່ບໍ່ສາມາດນຳໃຊ້ໄດ້ ສຳລັບ ການ ນຳເຂົ້າສັດ, ຜະລິດຕະພັນສັດ ຫຼື ຄ້າຂາຍສັດທີ່ມີຊີວິດ.

ອາຍຸຂອງໃບອະນຸຍາດດຳເນີນທຸລະກິດ ກ່ຽວກັບ ການຂ້າສັດ ສາມາດນຳໃຊ້ໄດ້ ຊາວສີ່ ເດືອນ ນັບແຕ່ ມື້ອອກໃບອະນຸຍາດເປັນຕົ້ນໄປ.

ກ່ອນໃບອະນຸຍາດຈະໝົດອາຍຸ ສາມສິບ ວັນ ຜູ້ຮັບໃບອະນຸຍາດ ຕ້ອງຍື່ນຄຳຮ້ອງເພື່ອຂໍຕໍ່ອາຍຸ ນຳ ອົງການທີ່ອອກໃບອະນຸຍາດ ຕາມແບບພິມທີ່ກົມລ້ຽງສັດ ແລະ ການປະມົງ ກຳນົດ. ການພິຈາລະນາ ຕໍ່ ຫຼື ບໍ່ ຕໍ່ໃບອະນຸຍາດ ຕ້ອງພິຈາລະນາບໍ່ໃຫ້ເກີນ ສິບຫ້າ ວັນ ນັບແຕ່ວັນທີ່ໄດ້ຮັບຄຳຮ້ອງ.

ໃນກໍລະນີ ທີ່ໃບອະນຸຍາດ ເສຍຫາຍ ຫຼື ຖືກທຳລາຍ ຜູ້ໄດ້ຮັບໃບອະນຸຍາດ ຕ້ອງແຈ້ງຕໍ່ອົງການທີ່ ອອກໃບອະນຸຍາດໂດຍດ່ວນ ໂດຍໃຫ້ປະກອບເອກະສານຂໍຮັບໃບອະນຸຍາດຄືນໃໝ່ ພາຍໃນກຳນົດເວລາ ສິບ ຫ້າ ວັນ ນັບແຕ່ວັນທີ່ໃບອະນຸຍາດ ເສຍຫາຍ ຫຼື ຖືກທຳລາຍ ແລະ ໃຫ້ອົງການທີ່ຮັບຜິດຊອບ ອອກໃບ ອະນຸຍາດໃໝ່ໃຫ້ແກ່ຜູ້ແຈ້ງເສຍຫາຍ ຫຼື ຖືກທຳລາຍ ບໍ່ເກີນ ສາມສິບ ວັນ.

**ມາດຕາ 38 ສິດ ແລະ ພັນທະ ຂອງຜູ້ໄດ້ຮັບອະນຸຍາດ**

ຜູ້ໄດ້ຮັບອະນຸຍາດດຳເນີນທຸລະກິດ ກ່ຽວກັບ ການຂ້າສັດ ມີ ສິດ ແລະ ພັນທະ ດັ່ງນີ້:

1. ດຳເນີນທຸລະກິດຂອງຕົນ ໃຫ້ຖືກຕ້ອງຕາມການອະນຸຍາດ, ມາດຕະຖານເຕັກນິກ, ກົດໝາຍ ແລະ ລະບຽບການຢ່າງເຂັ້ມງວດ;
2. ຈັດຫາ ຜູ້ດຳເນີນການ ແລະ ຜູ້ປະຕິບັດການ ເປັນພະນັກງານປະຈຳ ຢູ່ໃນວິສາຫະກິດຂອງຕົນ ຕາມຈຳນວນ ແລະ ເງື່ອນໄຂ ທີ່ກະຊວງກະສິກຳ ແລະ ປ່າໄມ້ ກຳນົດ;
3. ຕິດປ້າຍສະຖານທີ່ໂຮງຂ້າສັດ ຫຼື ບ່ອນຂ້າສັດຍ່ອຍ ໃນບ່ອນທີ່ເປີດເຜີຍ ແລະ ເປັນໄປຕາມ ລະບຽບການ ທີ່ອົງການຄຸ້ມຄອງ ແລະ ກວດກາ ວຽກງານຂ້າສັດ ແລະ ກວດກາອະນາໄມຊີ້ນ ແລະ ຂະແໜງການທີ່ກ່ຽວຂ້ອງກຳນົດ;
4. ສະແດງສຳເນົາໃບແຕ່ງຕັ້ງ ຫຼື ໃບປະກາດສະນິຍະບັດ ຫຼື ໃບຢັ້ງຢືນຜ່ານການຝຶກອົບຮົມຫຼັກສູດ ດ້ານວິຊາການ ທີ່ກ່ຽວຂ້ອງ ຂອງພະນັກງານກວດກາອະນາໄມຊີ້ນ ໄວ້ຢູ່ບ່ອນເປີດເຜີຍ ເຫັນໄດ້ ງ່າຍ;
5. ໃຫ້ມີລະບົບຕິດຕາມ ກ່ຽວກັບ ການຜະລິດ ແລະ ເກັບຕົວຢ່າງ ຕາມລະບຽບການ ທີ່ອົງການຄຸ້ມ ຄອງ ແລະ ກວດກາ ວຽກງານຂ້າສັດ ແລະ ກວດກາອະນາໄມຊີ້ນ ກຳນົດ;
6. ແຈ້ງຕໍ່ອົງການທີ່ອອກໃບອະນຸຍາດ ເພື່ອຂໍຕໍ່ອາຍຸ ຫຼື ຂໍອອກໃບອະນຸຍາດຄືນໃໝ່ ໃນກໍລະນີທີ່ ໃບອະນຸຍາດເສຍ ຫຼື ຖືກທຳລາຍ;
7. ໃຫ້ການຮ່ວມມືກັບອົງການຈັດຕັ້ງຂອງລັດ ໃນກໍລະນີ ທີ່ມີການກວດກາຄຸນນະພາບ, ຄວາມ ປອດໄພ, ມາດຕະຖານໂຮງຂ້າສັດ ແລະ ຜະລິດຕະພັນທີ່ເໝາະສົມ ຫຼື ບໍ່ເໝາະສົມ ສຳລັບການ ບໍລິໂພກ;
8. ສະໜອງຂໍ້ມູນການຜະລິດ ນັບທັງອຳນວຍຄວາມສະດວກໃຫ້ແກ່ການປະຕິບັດໜ້າທີ່ ຂອງພະ ນັກງານກວດກາອະນາໄມຊີ້ນ ແລະ ເຈົ້າໜ້າທີ່ສັດຕະວະແພດ;
9. ເສຍຄ່າທຳນຽມ, ຄ່າບໍລິການດ້ານວິຊາການ ແລະ ພັນທະອື່ນ ຕາມກົດໝາຍ ແລະ ລະບຽບການ;
10. ນຳໃຊ້ສິດ ແລະ ປະຕິບັດພັນທະອື່ນ ຕາມທີ່ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 39 ພັນທະ ຂອງຜູ້ດຳເນີນການຂ້າສັດ**

ຜູ້ດຳເນີນການຂ້າສັດ ມີ ພັນທະ ດັ່ງນີ້:

1. ຮັກສາຄວາມສະອາດ ຂອງຜະລິດຕະພັນສັດ ແລະ ສະຖານທີ່ຂ້າສັດ;
2. ເກັບຮັກສາ, ມອບຊາກ, ເຄື່ອງໃນ, ໜັງ, ຫົວ ຫຼື ອະໄວຍະວະອື່ນ ໃຫ້ພະນັກງານກວດກາອະນາໄມຊີ້ນ ເພື່ອເຮັດໜ້າທີ່ກວດກາອະນາໄມຊີ້ນໃຫ້ສຳເລັດ ແລ້ວ ຈຶ່ງໃຫ້ເຄື່ອນຍ້າຍອອກຈາກໂຮງຂ້າ;
3. ເກັບຮັກສາ ແລະ ລາຍງານ ຫຼັກຖານທີ່ພົບພະຍາດ ຫຼື ຂໍ້ບົກຜ່ອງຂອງຊາກສັດ;
4. ແຈ້ງໃຫ້ພະນັກງານ ຫຼື ເຈົ້າໜ້າທີ່ສັດຕະວະແພດ ຊາບ ໃນກໍລະນີພົບລູກສັດອ່ອນໃນທ້ອງ;
5. ອຳນວຍຄວາມສະດວກ ສຳລັບ ການເຮັດກາໝາຍ, ການເກັບຮັກສາຊາກ ໃນກໍລະນີທີ່ມີການລໍຖ້າຜົນການກວດກາຄືນໃໝ່;
6. ທຳລາຍຊີ້ນສ່ວນໃດໜຶ່ງຂອງຊາກ ທີ່ເຫັນວ່າບໍ່ປອດໄພ ຫຼື ບໍ່ເໝາະສົມ ສຳລັບບໍລິໂພກ;
7. ນຳໃຊ້ບັນດາເຄື່ອງໝາຍຕ່າງໆ ຕາມທີ່ພະນັກງານກວດກາອະນາໄມຊີ້ນ ກຳນົດ;
8. ສະໜອງຂໍ້ມູນການຜະລິດ ພ້ອມທັງອຳນວຍຄວາມສະດວກໃຫ້ແກ່ການປະຕິບັດໜ້າທີ່ ຂອງພະນັກງານກວດກາອະນາໄມຊີ້ນ ແລະ ສັດຕະວະແພດ;
9. ປະຕິບັດພັນທະອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 40 ການຢຸດເຊົາ ແລະ ການໂອນກິດຈະການ**

ຜູ້ໄດ້ຮັບໃບອະນຸຍາດດຳເນີນທຸລະກິດ ກ່ຽວກັບ ການຂ້າສັດ ທີ່ມີຈຸດປະສົງຢຸດເຊົາກິດຈະການ ຕ້ອງແຈ້ງເປັນລາຍລັກອັກສອນ ຕໍ່ອົງການຄຸ້ມຄອງ ແລະ ກວດກາ ວຽກງານຂ້າສັດ ແລະ ກວດກາອະນາໄມຊີ້ນ ພາຍໃນກຳນົດເວລາ ສິບຫ້າ ວັນ ກ່ອນມີການຢຸດເຊົາກິດຈະການ. ສຳລັບ ການໂອນກິດຈະການໃຫ້ປະຕິບັດຕາມທີ່ກຳນົດໄວ້ໃນກົດໝາຍວ່າດ້ວຍວິສາຫະກິດ.

**ມາດຕາ 41 ການໂຈະການດຳເນີນທຸລະກິດ**

ການດຳເນີນທຸລະກິດ ກ່ຽວກັບ ການຂ້າສັດ ຈະຖືກໂຈະໃນກໍລະນີ ດັ່ງນີ້:

1. ຕາມການສະເໜີຂອງຜູ້ດຳເນີນທຸລະກິດ;
2. ຜູ້ໄດ້ຮັບອະນຸຍາດບໍ່ປະຕິບັດຕາມການກ່າວເຕືອນ ຂອງຂະແໜງການກະສິກຳ ແລະ ປ່າໄມ້ ກ່ຽວກັບ ການປັບປຸງການປະຕິບັດເງື່ອນໄຂ, ມາດຕະຖານເຕັກນິກ ແລະ ຄຸນນະພາບຂອງການດຳເນີນທຸລະກິດ;
3. ດຳເນີນທຸລະກິດ ບໍ່ຖືກຕ້ອງຕາມການອະນຸຍາດ.

ການໂຈະການດຳເນີນທຸລະກິດ ກໍເພື່ອໃຫ້ຜູ້ໄດ້ຮັບອະນຸຍາດປັບປຸງແກ້ໄຂ ພາຍໃນກຳນົດເວລາ ເກົ້າສິບ ວັນ ແລະ ຕ້ອງແຈ້ງໃຫ້ຜູ້ໄດ້ຮັບອະນຸຍາດຮັບຮູ້ຢ່າງເປັນລາຍລັກອັກສອນ.

**ມາດຕາ 42 ການຖອນໃບອະນຸຍາດດຳເນີນທຸລະກິດ**

ໃບອະນຸຍາດດຳເນີນທຸລະກິດ ກ່ຽວກັບ ການຂ້າສັດ ຈະຖືກຖອນ ໃນກໍລະນີ ດັ່ງນີ້:

1. ຜູ້ໄດ້ຮັບອະນຸຍາດ ບໍ່ປັບປຸງ ຫຼື ແກ້ໄຂ ຕາມເງື່ອນໄຂ ແລະ ເວລາ ທີ່ໄດ້ກຳນົດໄວ້ໃນການແຈ້ງໂຈະ;
2. ຜູ້ໄດ້ຮັບອະນຸຍາດ ມີການກະທຳຜິດໃນເລື່ອງດຽວກັນພາຍໃນກຳນົດເວລາ ໜຶ່ງ ປີ;
3. ຜູ້ໄດ້ຮັບອະນຸຍາດ ຍົກເລີກກິດຈະການດ້ວຍຄວາມສະໝັກໃຈ.

**ມາດຕາ 43 ການສະເໜີ ຫຼື ຂໍອຸທອນ ການໂຈະ ຫຼື ການຖອນໃບອະນຸຍາດດຳເນີນທຸລະກິດ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ຖືກໂຈະ ຫຼື ຖອນ ການດຳເນີນທຸລະກິດກ່ຽວກັບການຂ້າສັດ ສາມາດ ສະເໜີ ຫຼື ຂໍອຸທອນຕໍ່ອົງການຂັ້ນເທິງຂອງອົງການທີ່ແຈ້ງໂຈະ ຫຼື ແຈ້ງຖອນ ເພື່ອພິຈາລະນາລຶບລ້າງ ຖ້າຫາກສາມາດ ພິສູດໃຫ້ເຫັນວ່າຕົນໄດ້ປະຕິບັດຕາມເງື່ອນໄຂ ຫຼື ລະບຽບການຢ່າງຖືກຕ້ອງແລ້ວ ຫຼື ມີຂໍ້ມູນ ຫຼັກຖານທາງດ້ານວິທະຍາສາດ ທີ່ຢັ້ງຢືນໄດ້ວ່າເຫດຜົນຂອງການແຈ້ງໂຈະ ຫຼື ແຈ້ງຖອນນັ້ນ ບໍ່ຖືກຕ້ອງຕາມ ຄວາມເປັນຈິງ.

**ມາດຕາ 44 ຄ່າທຳນຽມ ແລະ ຄ່າບໍລິການ**

ຄ່າທຳນຽມ ແລະ ຄ່າບໍລິການ ໃຫ້ປະຕິບັດຕາມລັດຖະບັນຍັດຂອງປະທານປະເທດ ທີ່ປະກາດໃຊ້ ໃນ ແຕ່ລະໄລຍະ.

## ໝວດທີ 6
## ຂໍ້ຫ້າມ

**ມາດຕາ 45 ຂໍ້ຫ້າມທົ່ວໄປ**

ຫ້າມ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ມີພຶດຕິກຳໃດໜຶ່ງ ດັ່ງນີ້:

1. ກັກຂັງ, ບັນທຸກ, ຂົນສົ່ງສັດ ແບບທໍລະມານ ຫຼື ຂັດກັບຫຼັກການສະຫວັດດີການສັດ;
2. ຂ້າສັດ ແບບທໍລະມານ;
3. ຊື້, ຂາຍ, ຂ້າ, ຄົວ ແລະ ບໍລິໂພກ ສັດ ທີ່ຕາຍຍ້ອນເກີດພະຍາດລະບາດ;
4. ຂ້າ ຫຼື ນຳໃຊ້ ຊາກສັດ ໂດຍບໍ່ໄດ້ລາຍງານ ຫຼື ຮັບອະນຸຍາດ;
5. ຈຳໜ່າຍສັດທີ່ຕາຍຍ້ອນພະຍາດ, ກິນຢາເບື່ອ ຫຼື ສານເຄມີທີ່ເປັນອັນຕະລາຍຕໍ່ຜູ້ບໍລິໂພກ;
6. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

**ມາດຕາ 46 ຂໍ້ຫ້າມ ສຳລັບຜູ້ດຳເນີນທຸລະກິດ**

ຫ້າມ ຜູ້ດຳເນີນທຸລະກິດ ກ່ຽວກັບ ການຂ້າສັດ ມີພຶດຕິກຳໃດໜຶ່ງ ດັ່ງນີ້:

1. ກໍ່ສ້າງໂຮງຂ້າສັດ ຫຼື ບ່ອນຂ້າສັດຍ່ອຍ ໂດຍບໍ່ໄດ້ຮັບອະນຸຍາດ;
2. ດຳເນີນການຂ້າສັດຢູ່ໃນສະຖານທີ່ ທີ່ບໍ່ໄດ້ຮັບອະນຸຍາດ;
3. ນຳເອົາສັດ ເຂົ້າ ຫຼື ອອກຈາກ ບ່ອນພັກສັດກ່ອນຂ້າ, ໂຮງຂ້າສັດ ແລະ ບ່ອນຂ້າສັດຍ່ອຍ ໂດຍບໍ່ໄດ້ຜ່ານການກວດກາ ຂອງພະນັກງານກວດກາອະນາໄມຊີ້ນ;
4. ຂ້າ, ຄົວ ແລະ ຈຳໜ່າຍ ສັດເຫງົາ, ເຈັບ ຫຼື ຕາຍ ໂດຍບໍ່ຮູ້ສາເຫດ ຫຼື ສັດທີ່ເປັນພະຍາດລະບາດ;
5. ຂ້າສັດ ທີ່ບໍ່ທັນໝົດໄລຍະຂອງຢາ ຫຼື ສານຕົກຄ້າງ;
6. ຂ້າສັດຖືພາມານ ຫຼື ສັດຢູ່ໃນໄລຍະທີ່ນຳໃຊ້ເປັນແນວພັນ;
7. ຊຸກເຊື່ອງ, ປອມແປງເອກະສານ, ສັບປ່ຽນຫຼັກຖານ ຂອງ ສັດ ແລະ ຜະລິດຕະພັນສັດ ທີ່ເປັນພະຍາດ ຫຼື ຜິດກົດໝາຍ ເພື່ອຜົນປະໂຫຍດຂອງຕົນ ທີ່ສ້າງຄວາມເສຍຫາຍໃຫ້ແກ່ຜູ້ບໍລິໂພກ;
8. ຈຳໜ່າຍຊີ້ນ ຫຼື ຜະລິດຕະພັນສັດ ທີ່ບໍ່ຜ່ານການກວດກາອະນາໄມຊີ້ນ ຫຼື ຜະລິດຕະພັນທີ່ບໍ່ເໝາະສົມ ສຳລັບບໍລິໂພກ;
9. ຂັດຂວາງ ການປະຕິບັດໜ້າທີ່ຂອງພະນັກງານກວດກາອະນາໄມຊີ້ນ;
10. ຂົນສົ່ງສັດ ຫຼື ຜະລິດຕະພັນສັດ ແບບບໍ່ຖືກຕ້ອງຕາມຫຼັກສຸຂານາໄມ;

11. ອະນຸຍາດໃຫ້ຜູ້ທີ່ມີອາການເຈັບປ່ວຍ ຫຼື ເປັນພະຍາດຕິດຕໍ່ ເຂົ້າເຮັດວຽກຢູ່ໃນໂຮງຂ້າສັດ ຫຼື ບ່ອນຂ້າສັດຍ່ອຍ;
12. ນໍາໃຊ້ສານທີ່ເປັນອັນຕະລາຍ ຫຼື ສານທີ່ຕ້ອງຫ້າມ ປະສົມລົງໃນຊາກສັດ ແລະ ຜະລິດຕະພັນສັດ;
13. ນໍາໃຊ້ພາຊະນະບັນຈຸ ທີ່ເປັນພິດ ຫຼື ບໍ່ເໝາະສົມ ສໍາລັບ ການຫຸ້ມຫໍ່ຊີ້ນສັດ ແລະ ຜະລິດຕະພັນສັດ;
14. ໃຫ້ສິນບົນແກ່ພະນັກງານ;
15. ນາບຂູ່, ໃຊ້ຄວາມຮຸນແຮງ ແລະ ວາຈາທີ່ບໍ່ເໝາະສົມ ຕໍ່ພະນັກງານ ຫຼື ເຈົ້າໜ້າທີ່;
16. ຂຶ້ນນັ່ງເທິງໂຕະທີ່ວາງຂາຍຊີ້ນ ສໍາລັບ ຜູ້ປະກອບການຂາຍຊີ້ນສັດຢູ່ຕະຫຼາດ;
17. ມີພຶດຕິກໍາອື່ນ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

**ມາດຕາ 47 ຂໍ້ຫ້າມ ສໍາລັບຜູ້ຂ້າສັດ**

ຫ້າມ ຜູ້ຂ້າສັດ ມີພຶດຕິກໍາໃດໜຶ່ງ ດັ່ງນີ້:

1. ດໍາເນີນການຂ້າສັດ ຖ້າຫາກຕົນເປັນພະຍາດຕິດຕໍ່;
2. ຂ້າສັດໂດຍບໍ່ໃສ່ເຄື່ອງປ້ອງກັນ ຫຼື ໃສ່ເຄື່ອງປ້ອງກັນບໍ່ຖືກຕ້ອງຕາມມາດຕະຖານ;
3. ຂ້າສັດໂດຍບໍ່ມີການອະນາໄມສ່ວນບຸກຄົນ ແລະ ບໍ່ປົດເຄື່ອງປະດັບ ກ່ອນເຂົ້າຂ້າສັດ;
4. ປ່ອຍໃຫ້ເຄື່ອງມືຂ້າສັດ ບໍ່ໄດ້ຮັບອະນາໄມ ຂ້າເຊື້ອ ທັງກ່ອນ ແລະ ຫຼັງຂ້າ;
5. ເຮັດໃຫ້ສະຖານທີ່ຂ້າສັດເປິເປື້ອນຈາກສິ່ງອື່ນ ນອກຈາກຜະລິດຕະພັນສັດ;
6. ປ່ອຍໃຫ້ບໍລິເວນຂ້າສັດບໍ່ໄດ້ຮັບການທໍາຄວາມສະອາດ;
7. ນໍາເອົາຊີ້ນສ່ວນສັດຈາກແຫຼ່ງອື່ນເຂົ້າມາປ່ຽນແທນ;
8. ມີພຶດຕິກໍາອື່ນ ທີ່ເປັນການລະເມີດກົດໝາຍ ແລະ ຄໍາແນະນໍາຂອງພະນັກງານກວດກາອະນາໄມຊີ້ນ.

**ມາດຕາ 48 ຂໍ້ຫ້າມ ສໍາລັບພະນັກງານ-ລັດຖະກອນ ແລະ ພະນັກງານກວດກາອະນາໄມຊີ້ນ**

ຫ້າມ ພະນັກງານ-ລັດຖະກອນ ແລະ ພະນັກງານກວດການອະນາໄມຊີ້ນ ມີພຶດຕິກໍາໃດໜຶ່ງ ດັ່ງນີ້:

1. ສວຍໃຊ້ສິດ, ໜ້າທີ່ ຕໍາແໜ່ງ ຊຶ່ງກໍ່ໃຫ້ເກີດຄວາມເສຍຫາຍແກ່ຜົນປະໂຫຍດຂອງລັດ, ລວມໝູ່ ແລະ ບຸກຄົນ;
2. ປະຕິບັດໜ້າທີ່ໂດຍຄວາມປະມາດ, ເມີນເສີຍ, ຂາດຄວາມຮັບຜິດຊອບ ແລະ ຂາດຈັນຍາບັນ ຕໍ່ວິຊາຊີບຂອງຕົນ ຊຶ່ງກໍ່ໃຫ້ເກີດຄວາມເສຍຫາຍແກ່ຜົນປະໂຫຍດຂອງລັດ, ລວມໝູ່ ແລະ ບຸກຄົນ;
3. ປົດເປືອນຄວາມຈິງ, ປິດບັງ, ເຊື່ອງອໍາ ແລະ ປົກປ້ອງ ຫຼື ໃຫ້ຄວາມຮ່ວມມື ກັບຜູ້ກະທໍາຜິດ;
4. ເປີດເຜີຍຄວາມລັບທາງລັດຖະການ ແລະ ຄວາມລັບຂອງຜູ້ດໍາເນີນທຸລະກິດ ກ່ຽວກັບ ການຂ້າສັດ;
5. ກົດໜ່ວງຖ່ວງດຶງເອກະສານ, ປອມແປງເອກະສານ ຫຼື ອອກເອກະສານບໍ່ຖືກຕ້ອງ;
6. ຮັບສິນບົນ, ຮຽກເອົາຄ່າທໍານຽມ, ຄ່າບໍລິການ ແລະ ນໍາໃຊ້ລາຍຮັບວິຊາການທີ່ບໍ່ຖືກຕ້ອງຕາມລະບຽບການ;
7. ມີພຶດຕິກໍາອື່ນ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

# ໝວດທີ 7
# ການຄຸ້ມຄອງ ແລະ ກວດກາ ວຽກງານຂ້າສັດ ແລະ ກວດກາອະນາໄມຊີ້ນ

**ມາດຕາ 49 ອົງການຄຸ້ມຄອງ ແລະ ກວດກາ ວຽກງານຂ້າສັດ ແລະ ກວດກາອະນາໄມຊີ້ນ**

ກະຊວງກະສິກຳ ແລະ ປ່າໄມ້ ເປັນຜູ້ຮັບຜິດຊອບໂດຍກົງ ແລະ ເປັນໃຈກາງປະສານສົມທົບກັບ ກະຊວງ, ອົງການ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ.

ອົງການຄຸ້ມຄອງ ແລະ ກວດກາ ວຽກງານຂ້າສັດ ແລະ ກວດກາອະນາໄມຊີ້ນ ປະກອບດ້ວຍ:

1. ກະຊວງກະສິກຳ ແລະ ປ່າໄມ້ ໂດຍແມ່ນ ກົມລ້ຽງສັດ ແລະ ການປະມົງ ເປັນເສນາທິການ;
2. ພະແນກກະສິກຳ ແລະ ປ່າໄມ້ ຂັ້ນແຂວງ ໂດຍແມ່ນ ຂະແໜງລ້ຽງສັດ ແລະ ການປະມົງ ເປັນເສນາທິການ;
3. ຫ້ອງການກະສິກຳ ແລະ ປ່າໄມ້ ຂັ້ນເມືອງ ໂດຍແມ່ນ ໜ່ວຍງານລ້ຽງສັດ ແລະ ການປະມົງ ເປັນເສນາທິການ.

**ມາດຕາ 50 ສິດ ແລະ ໜ້າທີ່ ຂອງກະຊວງກະສິກຳ ແລະ ປ່າໄມ້**

ກະຊວງກະສິກຳ ແລະ ປ່າໄມ້ ມີສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຄົ້ນຄວ້ານະໂຍບາຍ ແລະ ນິຕິກຳ ກ່ຽວກັບ ວຽກງານຂ້າສັດ ແລະ ກວດກາອະນາໄມຊີ້ນ ເພື່ອສະເໜີລັດຖະບານ ພິຈາລະນາ;
2. ຜັນຂະຫຍາຍນະໂຍບາຍ ກ່ຽວກັບ ວຽກງານຂ້າສັດ ແລະ ກວດກາອະນາໄມຊີ້ນ ໃຫ້ກາຍເປັນແຜນການ, ແຜນງານ ແລະ ໂຄງການລະອຽດຂອງຕົນ ແລ້ວຈັດຕັ້ງປະຕິບັດ;
3. ໂຄສະນາ, ເຜີຍແຜ່, ສຶກສາອົບຮົມ ກົດໝາຍ ແລະ ລະບຽບການ ກ່ຽວກັບ ວຽກງານຂ້າສັດ ແລະ ກວດກາອະນາໄມຊີ້ນ ໃນຂອບເຂດທົ່ວປະເທດ;
4. ສ້າງ, ບຳລຸງ, ຍົກລະດັບ ແລະ ຝຶກອົບຮົມວິຊາການ ກ່ຽວກັບ ການຂ້າສັດ ແລະ ກວດກາອະນາໄມຊີ້ນ ໃຫ້ແກ່ພະນັກງານກວດກາອະນາໄມຊີ້ນ ແລະ ຜູ້ດຳເນີນທຸລະກິດ ກ່ຽວກັບ ການຂ້າສັດ;
5. ສ້າງ ແລະ ປັບປຸງ ມາດຕະຖານເຕັກນິກ ກ່ຽວກັບ ການຂ້າສັດ, ການເກັບຮັກສາ, ການຂົນສົ່ງ, ການປຸງແຕ່ງ ຂັ້ນຕົ້ນ ແລະ ການຈຳໜ່າຍຊີ້ນສັດ ແລະ ຜະລິດຕະພັນສັດ;
6. ໃຫ້ທິດຊີ້ນຳ ທາງດ້ານວິຊາການ ຕໍ່ພະແນກກະສິກຳ ແລະ ປ່າໄມ້ ແຂວງ, ນະຄອນຫຼວງ ແລະ ຫ້ອງການກະສິກຳ ແລະ ປ່າໄມ້ ເມືອງ, ເທດສະບານ, ນະຄອນ;
7. ອອກລະບຽບການສະເພາະ ກ່ຽວກັບ ການຂ້າສັດ, ການກວດກາອະນາໄມຊີ້ນ, ການຂົນສົ່ງ, ສຸຂານາໄມ ໃນການວາງຂາຍ, ການເກັບຮັກສາ, ການຫຸ້ມຫໍ່ ແລະ ການຈັດລະດັບ ຜະລິດຕະພັນສັດ;
8. ຄົ້ນຄວ້າ, ພິຈາລະນາ ອອກ, ໂຈະ ຫຼື ຖອນໃບອະນຸຍາດດຳເນີນທຸລະກິດ ກ່ຽວກັບ ການຂ້າສັດ ທີ່ເປັນໂຮງຂ້າສັດຂະໜາດໃຫຍ່, ຂະໜາດກາງ ແລະ ໂຮງຂ້າສັດ ເພື່ອການສົ່ງອອກ ລວມທັງເອກະສານຢັ້ງຢືນ ສຳລັບ ການຮັບຮອງມາດຕະຖານສະຖານທີ່ປະກອບການຂ້າສັດ ແລະ ປຸງແຕ່ງຜະລິດຕະພັນສັດ ຕາມຄວາມຮັບຜິດຊອບຂອງຕົນ;
9. ດຳເນີນການກວດກາ ຕິດຕາມຄຸນນະພາບ ແລະ ຄວາມປອດໄພຂອງຜະລິດຕະພັນສັດ ລວມທັງການນຳໃຊ້ມາດຕະການດ້ານບໍລິຫານ ແລະ ວິຊາການ ຕາມຂອບເຂດສິດ ແລະ ຄວາມຮັບຜິດຊອບຂອງຕົນ;
10. ແຕ່ງຕັ້ງເຈົ້າໜ້າທີ່ກວດກາ ແລະ ຄະນະວິຊາການ ເພື່ອຊ່ວຍໃນການ ກວດກາ, ຕິດຕາມ ວຽກງານຂ້າສັດ ແລະ ກວດກາອະນາໄມຊີ້ນ ໃຫ້ມີປະສິດທິພາບ ແລະ ປະສິດທິຜົນ;

11. ຮັບ ແລະ ພິຈາລະນາ ແກ້ໄຂຄຳສະເໜີ ກ່ຽວກັບ ວຽກງານຂ້າສັດ ແລະ ກວດກາອະນາໄມຊີ້ນ;
12. ພົວພັນຮ່ວມມື ປະສານສົມທົບກັບ ກະຊວງ, ອົງການ ທັງພາຍໃນ ແລະ ຕ່າງປະເທດ ກ່ຽວກັບ ວຽກງານຂ້າສັດ ແລະ ກວດກາອະນາໄມຊີ້ນ;
13. ສະຫຼຸບລາຍງານ ກ່ຽວກັບ ການຄຸ້ມຄອງວຽກງານຂ້າສັດ ແລະ ກວດກາອະນາໄມຊີ້ນ ໃຫ້ລັດຖະບານ ຢ່າງເປັນປົກກະຕິ;
14. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 51 ສິດ ແລະ ໜ້າທີ່ ຂອງພະແນກກະສິກຳ ແລະ ປ່າໄມ້ ຂັ້ນແຂວງ**

ພະແນກກະສິກຳ ແລະ ປ່າໄມ້ ຂັ້ນແຂວງ ມີສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຜັນຂະຫຍາຍ ພ້ອມທັງ ຈັດຕັ້ງປະຕິບັດ ນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ ແລະ ລະບຽບການ ກ່ຽວກັບ ວຽກງານຂ້າສັດ ແລະ ກວດກາອະນາໄມຊີ້ນ;
2. ໂຄສະນາ, ເຜີຍແຜ່ ນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ, ລະບຽບການ, ຂໍ້ມູນ ຂ່າວສານ ກ່ຽວກັບ ວຽກງານຂ້າສັດ ແລະ ກວດກາອະນາໄມຊີ້ນ ໃຫ້ປະຊາຊົນ ແລະ ທຸກພາກສ່ວນເຂົ້າໃຈ ແລ້ວຈັດຕັ້ງປະຕິບັດ;
3. ຄົ້ນຄວ້າ ແລະ ນຳສະເໜີເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ ພິຈາລະນາ ອອກຂໍ້ຕົກລົງ, ຄຳສັ່ງ, ຄຳແນະນຳ ແລະ ແຈ້ງການ ກ່ຽວກັບ ວຽກງານຂ້າສັດ ແລະ ກວດກາອະນາໄມຊີ້ນ;
4. ຄົ້ນຄວ້າ ແລະ ພິຈາລະນາ ອອກ, ໂຈະ ຫຼື ຖອນໃບອະນຸຍາດດຳເນີນທຸລະກິດ ກ່ຽວກັບ ການຂ້າສັດ ຕາມຂອບເຂດຄວາມຮັບຜິດຊອບ ທີ່ໄດ້ກຳນົດໄວ້ໃນດຳລັດສະບັບນີ້;
5. ເຂົ້າຮ່ວມກວດກາ ເພື່ອນຳສະເໜີຂັ້ນເທິງ ພິຈາລະນາ ອອກໃບຢັ້ງຢືນມາດຕະຖານການຜະລິດທີ່ດີ ໃຫ້ແກ່ຜູ້ດຳເນີນທຸລະກິດ ກ່ຽວກັບ ການຂ້າສັດ;
6. ບຳລຸງ, ກໍ່ສ້າງ ແລະ ຍົກລະດັບບຸກຄະລາກອນ ກ່ຽວກັບ ວຽກງານຂ້າສັດ ແລະ ກວດກາອະນາໄມຊີ້ນ ທີ່ຢູ່ພາຍໃຕ້ຄວາມຮັບຜິດຊອບຂອງຕົນ;
7. ແຕ່ງຕັ້ງພະນັກງານ, ພະນັກງານກວດກາອະນາໄມຊີ້ນ ພາຍໃນຂອບເຂດແຂວງ, ນະຄອນຫຼວງ ເພື່ອດຳເນີນການກວດກາ, ຕິດຕາມ ວຽກງານຂ້າສັດ ແລະ ກວດກາອະນາໄມຊີ້ນ ໃຫ້ມີປະສິດທິພາບ ແລະ ປະສິດທິຜົນ;
8. ຮັບ ແລະ ພິຈາລະນາ ແກ້ໄຂຄຳສະເໜີ ກ່ຽວກັບວຽກງານຂ້າສັດ ແລະ ກວດກາອະນາໄມຊີ້ນ;
9. ຊຸກຍູ້, ຕິດຕາມ ແລະ ປະເມີນຜົນ ການຈັດຕັ້ງປະຕິບັດວຽກງານຂ້າສັດ ແລະ ກວດກາອະນາໄມຊີ້ນ ຂອງ ຫ້ອງການກະສິກຳ ແລະ ປ່າໄມ້ ເມືອງ, ເທດສະບານ, ນະຄອນ;
10. ປະສານສົມທົບກັບ ພະແນກການ, ຫ້ອງການ ຂັ້ນແຂວງ, ຂັ້ນເມືອງ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ໃນການຈັດຕັ້ງປະຕິບັດວຽກງານຂ້າສັດ ແລະ ກວດກາອະນາໄມຊີ້ນ;
11. ສະຫຼຸບ ແລະ ລາຍງານ ການຈັດຕັ້ງປະຕິບັດ ວຽກງານຂ້າສັດ ແລະ ກວດກາອະນາໄມຊີ້ນ ຕໍ່ກະຊວງກະສິກຳ ແລະ ປ່າໄມ້ ແລະ ອົງການປົກຄອງ ແຂວງ, ນະຄອນຫຼວງ ຢ່າງເປັນປົກກະຕິ;
12. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 52 ສິດ ແລະ ໜ້າທີ່ ຂອງຫ້ອງການກະສິກຳ ແລະ ປ່າໄມ້ ຂັ້ນເມືອງ**

ຫ້ອງການກະສິກຳ ແລະ ປ່າໄມ້ ຂັ້ນເມືອງ ມີສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຈັດຕັ້ງປະຕິບັດ ນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ ແລະ ລະບຽບການ ກ່ຽວກັບ ວຽກງານຂ້າສັດ ແລະ ກວດກາອະນາໄມຊີ້ນ;

2. ໂຄສະນາ, ເຜີຍແຜ່ ນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ ແລະ ລະບຽບການ, ຂໍ້ມູນ ຂ່າວສານ ກ່ຽວກັບ ວຽກງານຂ້າສັດ ແລະ ກວດກາອະນາໄມຊີ້ນ ໃຫ້ປະຊາຊົນ ແລະ ທຸກ ພາກສ່ວນ ຮັບຮູ້ ແລະ ເຂົ້າໃຈ;
3. ຄົ້ນຄວ້າ ແລະ ນຳສະເໜີ ເຈົ້າເມືອງ, ຫົວໜ້າເທດສະບານ, ເຈົ້ານະຄອນ ພິຈາລະນາ ອອກຂໍ້ຕົກລົງ, ຄຳສັ່ງ, ຄຳແນະນຳ ແລະ ແຈ້ງການ ກ່ຽວກັບ ວຽກງານຂ້າສັດ ແລະ ກວດກາອະນາໄມຊີ້ນ ໃຫ້ສອດຄ່ອງ ຕາມການມອບໝາຍຂອງກະຊວງກະສິກຳ ແລະ ປ່າໄມ້ ແລະ ຜັນຂະຫຍາຍ ຄຳສັ່ງຂອງລັດຖະມົນຕີ;
4. ດຳເນີນການຄຸ້ມຄອງ, ກຳກັບ, ດູແລ ການຈັດຕັ້ງປະຕິບັດ ວຽກງານກວດກາອະນາໄມຊີ້ນ ຢູ່ໃນໂຮງຂ້າສັດ ແລະ ບ່ອນຂ້າສັດຍ່ອຍ ທີ່ຢູ່ໃນຂອບເຂດເມືອງຂອງຕົນ ເພື່ອຮັບປະກັນຄວາມປອດໄພໃຫ້ແກ່ຜູ້ບໍລິໂພກ;
5. ເຂົ້າຮ່ວມ ການກວດກາ ເພື່ອພິຈາລະນາ ອອກ, ໂຈະ ຫຼື ຖອນ ໃບອະນຸຍາດດຳເນີນທຸລະກິດ ກ່ຽວກັບ ການຂ້າສັດ ຂອງໂຮງຂ້າສັດ ແລະ ບ່ອນຂ້າສັດຍ່ອຍ ຕາມການມອບໝາຍຂອງຂັ້ນເທິງຂອງຕົນ;
6. ເຂົ້າຮ່ວມ ກວດກາ ເພື່ອນຳສະເໜີຂັ້ນເທິງ ພິຈາລະນາ ອອກໃບຢັ້ງຢືນມາດຕະຖານການຜະລິດທີ່ດີ ໃຫ້ແກ່ຜູ້ດຳເນີນທຸລະກິດ ກ່ຽວກັບ ການຂ້າສັດ;
7. ຝຶກອົບຮົມ ໃຫ້ແກ່ຜູ້ໄດ້ຮັບອະນຸຍາດດຳເນີນທຸລະກິດ ແລະ ຊາວກະສິກອນ ທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນ ກ່ຽວກັບ ວຽກງານຂ້າສັດ ແລະ ກວດກາອະນາໄມຊີ້ນ;
8. ສະເໜີພະແນກກະສິກຳ ແລະ ປ່າໄມ້ ຂັ້ນແຂວງ ພິຈາລະນາ ແຕ່ງຕັ້ງ ຫຼື ຍົກຍ້າຍ ພະນັກງານ, ພະນັກງານກວດກາອະນາໄມຊີ້ນ ຂັ້ນເມືອງ;
9. ຮັບ ແລະ ພິຈາລະນາ ແກ້ໄຂຄຳສະເໜີ ກ່ຽວກັບ ວຽກງານຂ້າສັດ ແລະ ກວດກາອະນາໄມຊີ້ນ;
10. ປະສານສົມທົບກັບພາກສ່ວນອື່ນທີ່ກ່ຽວຂ້ອງ ໃນການຈັດຕັ້ງປະຕິບັດ ວຽກງານຂ້າສັດ ແລະ ກວດກາອະນາໄມຊີ້ນ;
11. ສະຫຼຸບ ແລະ ລາຍງານ ການຈັດຕັ້ງປະຕິບັດ ວຽກງານຂ້າສັດ ແລະ ກວດກາອະນາໄມຊີ້ນ ໃຫ້ແກ່ ພະແນກກະສິກຳ ແລະ ປ່າໄມ້, ເຈົ້າເມືອງ, ຫົວໜ້າເທດສະບານ ແລະ ເຈົ້ານະຄອນ ຢ່າງເປັນປົກກະຕິ;
12. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

### ມາດຕາ 53 ສິດ ແລະ ໜ້າທີ່ ຂອງຂະແໜງການອື່ນ ແລະ ອົງການປົກຄອງທ້ອງຖິ່ນ

ຂະແໜງການອື່ນ ແລະ ອົງການປົກຄອງທ້ອງຖິ່ນ ມີສິດ ແລະ ໜ້າທີ່ ປະສານສົມທົບ ກັບຂະແໜງການກະສິກຳ ແລະ ປ່າໄມ້ ຕາມພາລະບົດບາດ ແລະ ຄວາມຮັບຜິດຊອບຂອງຕົນ ເພື່ອເຮັດໃຫ້ວຽກງານຂ້າສັດ ແລະ ກວດກາອະນາໄມຊີ້ນ ມີປະສິດທິພາບ ແລະ ປະສິດທິຜົນ.

### ມາດຕາ 54 ສິດ ແລະ ໜ້າທີ່ ຂອງພະນັກງານກວດກາອະນາໄມຊີ້ນ

ພະນັກງານກວດກາອະນາໄມຊີ້ນ ແມ່ນ ບຸກຄະລາກອນທີ່ ອົງການຄຸ້ມຄອງ ແລະ ກວດກາ ວຽກງານຂ້າສັດ ແລະ ກວດກາອະນາໄມຊີ້ນ ແຕ່ງຕັ້ງໃຫ້ເປັນຜູ້ກວດກາອະນາໄມຊີ້ນ ຊຶ່ງມີສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ປະຕິບັດຕາມຄຳສັ່ງ, ແຈ້ງການ ແລະ ຄຳແນະນຳ ຢ່າງເປັນທາງການຂອງຂັ້ນເທິງ ກ່ຽວກັບ ການຄຸ້ມຄອງວຽກງານຂ້າສັດ ແລະ ກວດກາອະນາໄມຊີ້ນ;
2. ປະຕິບັດວຽກງານການກວດກາອະນາໄມຊີ້ນ, ສຸຂານາໄມໂຮງຂ້າສັດ ແລະ ບ່ອນຂ້າສັດຍ່ອຍ ຕາມແຜນວຽກ ປະຈຳເດືອນ, ປະຈຳອາທິດ ແລະ ປະຈຳວັນ ຂອງຕົນ ຕາມຫຼັກວິຊາການ;

3. ຝຶກອົບຮົມ ກ່ຽວກັບ ຫຼັກການສຸຂານາໄມໃນໂຮງຂ້າສັດ ຫຼື ບ່ອນຂ້າສັດຍ່ອຍ ໃຫ້ແກ່ຜູ້ຊ່ວຍພະນັກງານກວດກາອະນາໄມຊີ້ນ ປະຈຳໂຮງຂ້າສັດ ຫຼື ບ່ອນຂ້າສັດຍ່ອຍ, ພະນັກງານ ແລະ ກຳມະກອນ ໃຫ້ເຂົ້າໃຈ ແລະ ຈັດຕັ້ງປະຕິບັດ;
4. ກວດກາເອກະສານຂອງສັດທີ່ຈະນຳເຂົ້າມາຂ້າ ເຊັ່ນ: ໃບອະນຸຍາດເຄື່ອນຍ້າຍສັດ, ໃບຢັ້ງຢືນສຸຂະພາບສັດ, ໃບລາຍງານການນຳໃຊ້ຢາສັດຕະວະແພດ, ໃບທະບຽນພິມສັດ ແລະ ໜັງສືຊື້, ຂາຍສັດ;
5. ກວດກາສະຖານທີ່ກັກຂັງສັດ, ກວດ ແລະ ຢັ້ງຢືນສຸຂະພາບສັດກ່ອນຂ້າ;
6. ກວດກາອະນາໄມຊີ້ນ ຫຼັງຂ້າສັດ, ຈ້ຳກາ ແລະ ຢັ້ງຢືນສຸຂະລັກສະນະຂອງຜະລິດຕະພັນສັດ ຫຼັງຂ້າ, ເກັບຮັກສາ ແລະ ອອກໃບນຳສົ່ງຜະລິດຕະພັນສັດ ເພື່ອນຳໄປຈຳໜ່າຍ;
7. ເກັບຕົວຢ່າງສົ່ງກວດເປັນປົກກະຕິ ຫຼື ໃນກໍລະນີສົງໄສຕິດເຊື້ອພະຍາດ;
8. ຕິດຕາມ ກວດກາ ການຈຳໜ່າຍຜະລິດຕະພັນສັດ ຢູ່ຕາມຫ້ອງຕະຫຼາດ ແລະ ຮ້ານຄ້າຕ່າງໆ;
9. ກັກ ຫຼື ຍຶດຊີ້ນ ແລະ ຜະລິດຕະພັນສັດ ທີ່ສົງໄສວ່າຕິດເຊື້ອພະຍາດລະບາດສັດ ຫຼື ບໍ່ໄດ້ຜ່ານການຢັ້ງຢືນຢ່າງຖືກຕ້ອງ ໃນນີ້ ລວມທັງ ຊີ້ນ ຫຼື ຜະລິດຕະພັນສັດ ທີ່ມີການລັກລອບເຄື່ອນຍ້າຍເຂົ້າຕະຫຼາດສົດ ຫຼື ການຂາຍຊີ້ນເຄື່ອນທີ່;
10. ຕິດຕາມ ແລະ ປະເມີນ ການອະນາໄມ, ຂ້າເຊື້ອ ໂຮງຂ້າສັດ ແລະ ບ່ອນຂ້າສັດຍ່ອຍ;
11. ສັ່ງໂຈະການຂ້າສັດ ໃນກໍລະນີກວດພົບເຊື້ອພະຍາດສັດທີ່ຈຳເປັນຕ້ອງແຈ້ງ;
12. ຕິດຕາມ, ກວດກາ ການທຳລາຍສັດ ຫຼື ຊາກສັດ ໃນກໍລະນີພົບເຊື້ອພະຍາດສັດທີ່ຈຳເປັນຕ້ອງແຈ້ງ;
13. ສະເໜີຕໍ່ອົງການຄຸ້ມຄອງ ແລະ ກວດກາ ວຽກງານຂ້າສັດ ແລະ ກວດກາອະນາໄມຊີ້ນ ສັ່ງປິດໂຮງຂ້າສັດ ໃນກໍລະນີກວດພົບເຊື້ອພະຍາດລະບາດສັດທີ່ຈຳເປັນຕ້ອງແຈ້ງຕາມລະບຽບການ;
14. ສະຫຼຸບ, ລາຍງານ ຜົນການຈັດຕັ້ງປະຕິບັດວຽກງານຂ້າສັດ ແລະ ກວດກາອະນາໄມຊີ້ນ ໃຫ້ຂັ້ນເທິງຂອງຕົນ ຢ່າງເປັນປົກກະຕິ ແລະ ລາຍງານສຸກເສີນ ໃນກໍລະນີພົບພະຍາດລະບາດຢູ່ໃນໂຮງຂ້າສັດ ຫຼື ບ່ອນຂ້າສັດຍ່ອຍ;
15. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 55 ເນື້ອໃນການກວດກາ**

ການກວດກາວຽກງານຂ້າສັດ ແລະ ກວດກາອະນາໄມຊີ້ນ ປະກອບມີເນື້ອໃນຕົ້ນຕໍ ດັ່ງນີ້:

1. ການປະຕິບັດກົດໝາຍ ແລະ ລະບຽບການ ກ່ຽວກັບ ວຽກງານຂ້າສັດ ແລະ ກວດກາອະນາໄມຊີ້ນ;
2. ການປະຕິບັດໜ້າທີ່ຂອງພະນັກງານ ແລະ ເຈົ້າໜ້າທີ່ສັດຕະວະແພດ;
3. ການດຳເນີນທຸລະກິດ ກ່ຽວກັບ ການຂ້າສັດ, ປຸງແຕ່ງ ແລະ ຈຳໜ່າຍຜະລິດຕະພັນສັດຂັ້ນຕົ້ນຂອງຜູ້ໄດ້ຮັບອະນຸຍາດ;
4. ການສ້າງ ແລະ ປະຕິບັດແຜນການ ກ່ຽວກັບ ວຽກງານຂ້າສັດ ແລະ ກວດກາອະນາໄມຊີ້ນ.

**ມາດຕາ 56 ຮູບການກວດກາ**

ການກວດກາວຽກງານຂ້າສັດ ແລະ ກວດກາອະນາໄມຊີ້ນ ມີ ສາມຮູບການ ດັ່ງນີ້:

1. ການກວດກາຕາມປົກກະຕິ ຊຶ່ງແມ່ນ ການກວດກາທີ່ດຳເນີນໄປຕາມແຜນການຢ່າງເປັນປະຈຳ ແລະ ມີກຳນົດເວລາ ອັນແນ່ນອນ;
2. ການກວດກາໂດຍມີການແຈ້ງໃຫ້ຮູ້ລ່ວງໜ້າ ຊຶ່ງແມ່ນ ການກວດການອກແຜນ ເມື່ອເຫັນວ່າມີຄວາມຈຳເປັນ ໂດຍແຈ້ງໃຫ້ເປົ້າໝາຍຖືກກວດກາຮູ້ລ່ວງໜ້າ;
3. ການກວດກາແບບກະທັນຫັນ ຊຶ່ງແມ່ນ ການກວດກາໂດຍຮີບດ່ວນ ທີ່ບໍ່ໄດ້ແຈ້ງໃຫ້ເປົ້າໝາຍຖືກກວດກາຮູ້ລ່ວງໜ້າ.

ການກວດກາ ໃຫ້ປະຕິບັດຕາມກົດໝາຍຢ່າງເຂັ້ມງວດ.

## ໝວດທີ 8
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 57 ນະໂຍບາຍຕໍ່ຜູ້ມີຜົນງານ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ແລະ ພະນັກງານລັດ ທີ່ຮັບຜິດຊອບວຽກງານຄຸ້ມຄອງ ແລະ ກວດກາ ວຽກງານຂ້າສັດ ແລະ ກວດກາອະນາໄມຊີ້ນ ທີ່ມີຜົນງານດີເດັ່ນ ໃນການຈັດຕັ້ງປະຕິບັດດຳລັດສະບັບນີ້ ເປັນຕົ້ນ ການດຳເນີນທຸລະກິດ ກ່ຽວກັບ ການຂ້າສັດ ໄດ້ຕາມມາດຕະຖານເຕັກນິກ, ມີຄຸນນະພາບ ແລະ ຄວາມປອດໄພ ຈະໄດ້ຮັບການຍ້ອງຍໍ ແລະ ນະໂຍບາຍອື່ນ ຕາມລະບຽບການ.

**ມາດຕາ 58 ມາດຕະການຕໍ່ຜູ້ລະເມີດ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ລະເມີດດຳລັດສະບັບນີ້ ເປັນຕົ້ນ ຂໍ້ຫ້າມ ຈະຖືກສຶກສາອົບຮົມ, ລົງວິໄນ, ປັບໃໝ, ໃຊ້ແທນຄ່າເສຍຫາຍທາງແພ່ງ ຫຼື ລົງໂທດທາງອາຍາ ຕາມກໍລະນີ ເບົາ ຫຼື ໜັກ.

**ມາດຕາ 59 ມາດຕະການສຶກສາອົບຮົມ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ລະເມີດດຳລັດສະບັບນີ້ ເປັນຕົ້ນ ຂໍ້ຫ້າມ ທີ່ມີລັກສະນະເບົາ ຈະຖືກກ່າວເຕືອນ ແລະ ສຶກສາອົບຮົມ.

**ມາດຕາ 60 ມາດຕະການທາງວິໄນ**

ເຈົ້າໜ້າທີ່ ແລະ ພະນັກງານ-ລັດຖະກອນ ທີ່ລະເມີດດຳລັດສະບັບນີ້ ເປັນຕົ້ນ ຂໍ້ຫ້າມ ຊຶ່ງບໍ່ເປັນການກະທຳຜິດທາງອາຍາ, ກໍ່ຄວາມເສຍຫາຍ ແຕ່ບໍ່ຈິງໃຈລາຍງານ ຈະຖືກລົງວິໄນ ຕາມກົດໝາຍວ່າດ້ວຍພະນັກງານ-ລັດຖະກອນ.

**ມາດຕາ 61 ມາດຕະການປັບໃໝ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ລະເມີດດຳລັດສະບັບນີ້ ຈະຖືກປັບໃໝຕາມກໍລະນີ ດັ່ງນີ້:

1. ຊາວຫ້າ ສ່ວນຮ້ອຍ ຂອງມູນຄ່າສັດ ຫຼື ຜະລິດຕະພັນສັດ ສຳລັບ ຜູ້ບໍ່ໄດ້ຮັບອະນຸຍາດດຳເນີນທຸລະກິດ ກ່ຽວກັບ ການຂ້າສັດ;
2. ຫົກສິບ ສ່ວນຮ້ອຍ ຂອງມູນຄ່າຜະລິດຕະພັນສັດ ສຳລັບ ຜູ້ລັກລອບຈຳໜ່າຍຜະລິດຕະພັນສັດ;
3. ໜຶ່ງເທົ່າຂອງມູນຄ່າຜະລິດຕະພັນສັດ ສຳລັບ ການຈຳໜ່າຍສັດ ຫຼື ຜະລິດຕະພັນສັດ ທີ່ເປັນພະຍາດລະບາດ ຫຼື ສັດທີ່ບໍ່ປອດໄພຕໍ່ຜູ້ບໍລິໂພກ.

**ມາດຕາ 62 ມາດຕະການທາງແພ່ງ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ລະເມີດດຳລັດສະບັບນີ້ ຊຶ່ງກໍ່ຄວາມເສຍຫາຍໃຫ້ແກ່ຜົນປະໂຫຍດ ຂອງລັດ, ລວມໝູ່, ສັງຄົມ ຫຼື ບຸກຄົນອື່ນ ຕ້ອງໄດ້ໃຊ້ແທນຄ່າເສຍຫາຍຕາມທີ່ຕົນໄດ້ກໍ່ຂຶ້ນ.

**ມາດຕາ 63 ມາດຕະການທາງອາຍາ**

ບຸກຄົນ, ນິຕິບຸກຄົນ ທີ່ລະເມີດດຳລັດສະບັບນີ້ ຊຶ່ງເປັນການກະທຳຜິດທາງອາຍາ ຈະຖືກລົງໂທດ ຕາມປະມວນກົດໝາຍອາຍາ ແລະ ກົດໝາຍອື່ນ ທີ່ກຳນົດໂທດທາງອາຍາ ຕາມກໍລະນີ ເບົາ ຫຼື ໜັກ.

## ໝວດທີ 9
## ບົດບັນຍັດສຸດທ້າຍ

**ມາດຕາ 64 ການຈັດຕັ້ງປະຕິບັດ**

ກະຊວງກະສິກຳ ແລະ ປ່າໄມ້ ເປັນເຈົ້າການໃນການຈັດຕັ້ງປະຕິບັດດຳລັດສະບັບນີ້ ໃຫ້ໄດ້ຮັບຜົນດີ.

ກະຊວງ, ອົງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ຈົ່ງຮັບຮູ້ ແລະ ປະຕິບັດ ດຳລັດສະບັບນີ້ ຢ່າງເຂັ້ມງວດ.

**ມາດຕາ 65 ຜົນສັກສິດ**

ດຳລັດສະບັບນີ້ ມີຜົນສັກສິດພາຍຫຼັງລົງລາຍເຊັນ ແລະ ໄດ້ລົງໃນຈົດໝາຍເຫດທາງລັດຖະການ ສິບຫ້າ ວັນ.

**ຕາງໜ້າ ລັດຖະບານ ແຫ່ງ ສປປ ລາວ**
**ນາຍົກລັດຖະມົນຕີ**

ທອງລຸນ ສີສຸລິດ